ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 123/ປປທ

ນະຄອນຫຼວງວຽງຈັນ, ວັນທີ 12 ສິງຫາ 2024

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້

## ກົດໝາຍວ່າດ້ວຍ ການສະກັດກັ້ນ ແລະ ຕ້ານອັກຄີໄພ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 129/ສພຊ, ລົງວັນທີ 28 ມິຖຸນາ 2024 ກ່ຽວກັບການຮັບຮອງເອົາ ກົດໝາຍວ່າດ້ວຍ ການສະກັດກັ້ນ ແລະ ຕ້ານອັກຄີໄພ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 23/ຄປຈ, ລົງວັນທີ 29 ກໍລະກົດ 2024

## ປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

**ມາດຕາ 1** ປະກາດໃຊ້ ກົດໝາຍວ່າດ້ວຍ ການສະກັດກັ້ນ ແລະ ຕ້ານອັກຄີໄພ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ**

ເລກທີ 129 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 28 / 06 / 24

## ມະຕິ
## ກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ
## (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ (ສະບັບປັບປຸງ) ໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 25 ມິຖຸນາ 2024 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 28 ມິຖຸນາ 2024.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ                                                                                                    ເລກທີ 61 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 28 ມິຖຸນາ 2024

# ກົດໝາຍ
# ວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ ຄຸ້ມຄອງ, ຕິດຕາມ ກວດກາ ວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ເພື່ອໃຫ້ທົ່ວປວງຊົນ ມີສະຕິເປັນເຈົ້າການຕໍ່ວຽກງານດັ່ງກ່າວ, ເຮັດໃຫ້ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ມີຄວາມໜັກແໜ້ນ, ເຂັ້ມແຂງ, ຊຳນານ ທາງດ້ານວິຊາສະເພາະ, ມີແບບແຜນວິທີເຮັດວຽກທີ່ວ່ອງໄວ, ທັນສະໄໝເທື່ອລະກ້າວ, ຮັບປະກັນ ການສະກັດກັ້ນ ແລະ ຕ້ານອັກຄີໄພ ໃຫ້ທັນການ, ມີປະສິດທິພາບ ແລະ ມີປະສິດທິຜົນ ແນໃສ່ປ້ອງກັນບໍ່ໃຫ້ເກີດຜົນເສຍຫາຍ ຕໍ່ ຊີວິດ, ສຸຂະພາບ, ຊັບສິນ ຂອງພົນລະເມືອງ, ຂອງລັດ, ລວມໝູ່, ທຳມະຊາດ ແລະ ສິ່ງແວດລ້ອມ, ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ປອດໄພຈາກອັກຄີໄພ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 (ປັບປຸງ) ການສະກັດກັ້ນ ແລະ ຕ້ານອັກຄີໄພ**

ການສະກັດກັ້ນອັກຄີໄພ ແມ່ນ ການວາງແຜນປ້ອງກັນອັກຄີໄພໄວ້ລ່ວງໜ້າ ດ້ວຍການກະກຽມ ຈັດຕັ້ງກຳລັງພົນ, ອຸປະກອນເຕັກນິກ, ສ້າງລະບົບປ້ອງກັນອັກຄີໄພ, ການກວດກາເຕັກນິກ, ການນຳໃຊ້ມາດຕະການຕ່າງໆ, ການໂຄສະນາ, ການສຶກສາອົບຮົມ, ການແນະນຳ ທົ່ວປວງຊົນໃຫ້ ຮັບຮູ້, ເຂົ້າໃຈ ມີຄວາມກຽມພ້ອມ ເພື່ອສະກັດກັ້ນບໍ່ໃຫ້ອັກຄີໄພເກີດຂຶ້ນ.

ການຕ້ານອັກຄີໄພ ແມ່ນ ການນຳໃຊ້ ກຳລັງພົນ, ພາຫະນະ, ອຸປະກອນເຕັກນິກ, ວັດຖຸປະກອນ ແລະ ຍຸດທະວິທີ ເຂົ້າໃນການຕ້ານອັກຄີໄພຢ່າງຮີບດ່ວນ ແລະ ທັນການ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ອັກຄີໄພ** ໝາຍເຖິງ ໄພອັນຕະລາຍທີ່ເກີດຈາກໄຟໄໝ້ ຊຶ່ງສ້າງຜົນເສຍຫາຍຕໍ່ ຊີວິດ, ສຸຂະພາບ, ຊັບສິນ ຂອງພົນລະເມືອງ, ຂອງລັດ, ລວມໝູ່, ທຳມະຊາດ ແລະ ສິ່ງແວດລ້ອມ;

2. **ການໄໝ້** ໝາຍເຖິງ ການເກີດປະຕິກິລິຍາທາງວັດຖຸ, ເຄມີ, ແຜ່ຄວາມຮ້ອນ ແລະ ກະຈາຍແສງສະຫວ່າງ;

3. **ທາດໄໝ້ລະເບີດ** ໝາຍເຖິງ ທາດແຂງ, ທາດແຫຼວ ແລະ ທາດອາຍ ທີ່ຕິດໄຟ ແລະ ລຸກໄໝ້ໄດ້ງ່າຍ;

4. **ວັດຖຸໄວໄຟ** ໝາຍເຖິງ ວັດຖຸ ແລະ ທາດທີ່ຕິດໄຟໄດ້ໄວ ເປັນຕົ້ນ ນ້ຳມັນ, ອາຍແກັດ, ໝື້;

5. **ອຸປະກອນເຕັກນິກ** ໝາຍເຖິງ ອຸປະກອນວິຊາສະເພາະ ທີ່ນຳໃຊ້ເຂົ້າໃນວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ເປັນຕົ້ນ ສາຍສົ່ງນ້ຳ, ປືນສີດນ້ຳ, ເຄື່ອງດັກຈັບຄວັນ, ເຄື່ອງດັກຈັບຄວາມຮ້ອນ, ລະບົບເຮັດຄວາມເປັນ, ລະບົບພົ່ນສີດນ້ຳ, ເຄື່ອງມອດໄຟອັດຕະໂນມັດ;

6. **ພື້ນທີ່ຕ້ານອັກຄີໄພ** ໝາຍເຖິງ ບໍລິເວນ ສະຖານທີ່ບ່ອນເກີດໄຟໄໝ້ ລວມທັງເຂດຕິດກັບຈຸດເກີດເຫດ ທີ່ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ພວມເຮັດໜ້າທີ່ມອດໄຟ;

7. **ສຳນັກງານ, ອົງການ** ໝາຍເຖິງ ສະຖານທີ່ການຈັດຕັ້ງຂອງ ລັດ, ສຳນັກງານຜູ້ຕາງໜ້າການທູດ, ສຳນັກງານຜູ້ຕາງໜ້າກົງສູນ, ອົງການຈັດຕັ້ງສາກົນ ແລະ ສະຖານທີ່ດຳເນີນກິດຈະການ;

8. **ມາດຕະຖານເຕັກນິກສະກັດກັ້ນ ແລະ ຕ້ານອັກຄີໄພ** ໝາຍເຖິງ ການກຳນົດຫຼັກການ, ລະບຽບການ ແລະ ຄຸນນະພາບ ກ່ຽວກັບຄວາມປອດໄພທາງດ້ານອັກຄີໄພ;

9. **ອັກຄີໄພຮ້າຍແຮງ** ໝາຍເຖິງ ໄພອັນຕະລາຍທີ່ເກີດຈາກໄຟໄໝ້ ຂະໜາດໃຫຍ່ ແລະ ແຜ່ລາມ ເປັນບໍລິເວນວົງກວ້າງ ຊຶ່ງອາດຈະສົ່ງຜົນກະທົບສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ເປັນຕົ້ນ ໄຟໄໝ້ລາມປ່າ, ເຂດຊຸມຊົນ, ຕົວເມືອງ;

10. **ເຂດເສດຖະກິດ** ໝາຍເຖິງ ເຂດທີ່ກຳນົດໄວ້ເພື່ອເປົ້າໝາຍພັດທະນາໂຄງລ່າງພື້ນຖານຮອງຮັບໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ມາດຳເນີນໃນເຂດເສດຖະກິດ ຊຶ່ງປະກອບດ້ວຍ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ.

### ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ

ລັດ ໃຫ້ຄວາມສຳຄັນ ຕໍ່ວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ດ້ວຍການ ສ້າງໂຄງລ່າງພື້ນຖານໃຫ້ເປັນລະບົບຄົບຊຸດ, ປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ອຸປະກອນເຕັກນິກ, ວັດຖຸປະກອນ ແລະ ເຕັກໂນໂລຊີທີ່ທັນສະໄໝ.

ລັດ ສ້າງ ແລະ ພັດທະນາ ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ໃຫ້ມີຄວາມຮູ້, ຄວາມສາມາດ, ຄວາມຊຳນານງານດ້ານວິຊາສະເພາະ ເພື່ອຮັບປະກັນວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ໃຫ້ມີຄວາມເຂັ້ມແຂງ ແລະ ທັນສະໄໝ.

ລັດ ປຸກລະດົມ, ໂຄສະນາ, ສຶກສາອົບຮົມທົ່ວປວງຊົນໃຫ້ຮູ້ພັນທະ ແລະ ມີສະຕິເປັນເຈົ້າການໃນການສະກັດກັ້ນ ແລະ ຕ້ານອັກຄີໄພ, ປະກອບສ່ວນດ້ານເຫື່ອແຮງ, ພາຫະນະ, ອຸປະກອນເຕັກນິກ, ວັດຖຸປະກອນ ແລະ ຊັບສິນ.

ລັດ ສົ່ງເສີມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ມາລົງທຶນກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ.

### ມາດຕາ 5 (ປັບປຸງ) ຫຼັກການ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ

ວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ຖືເອົາ ການສະກັດກັ້ນເປັນວຽກງານຕົ້ນຕໍ, ການຕ້ານອັກຄີໄພ ເປັນວຽກງານສຳຄັນ;

3. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ, ພາກສ່ວນອື່ນທີ່ກ່ຽວຂ້ອງ ແລະ ການມີສ່ວນຮ່ວມຂອງທົ່ວປວງຊົນ;

4. ຮັບປະກັນ ກໍາລັງພົນ, ພາຫະນະ, ອຸປະກອນເຕັກນິກ, ວັດຖຸປະກອນ, ແຜນຕ້ານອັກຄີໄພ ແລະ ເງື່ອນໄຂອື່ນ ເພື່ອດັບມອດໄຟ ໃຫ້ວ່ອງໄວ, ທັນການ ແລະ ມີປະສິດທິຜົນ.

**ມາດຕາ 6 (ປັບປຸງ) ພັນທະຂອງພົນລະເມືອງ ຕໍ່ວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ**

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ດໍາລົງຊີວິດ ຢູ່ ສປປ ລາວ ມີພັນທະໃນການສະກັດກັ້ນ ແລະ ຕ້ານອັກຄີໄພ ດ້ວຍການຕິດຕາມ, ລາຍງານສະພາບຄວາມສ່ຽງ ທີ່ຈະເກີດອັກຄີໄພ, ເຂົ້າຮ່ວມ, ໃຫ້ການຮ່ວມມື ແລະ ປະກອບສ່ວນສະໜອງ ຊັບສິນ, ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ລວມທັງສະໜອງນໍ້າຈາກແຫຼ່ງນໍ້າ ທີ່ຈໍາເປັນໃຫ້ແກ່ວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ.

**ມາດຕາ 7 (ໃໝ່) ຂອບເຂດການນໍາໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ດໍາລົງຊີວິດ ຢູ່ ສປປ ລາວ.

**ມາດຕາ 8 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ແລະ ຮ່ວມມື ກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ດ້ວຍການ ແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ, ການຝຶກອົບຮົມ ແລະ ການຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄວາມກ້າວໜ້າ, ທັນສະໄໝ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

ໃນກໍລະນີມີອັກຄີໄພຮ້າຍແຮງເກີດຂຶ້ນ ລັດ ສປປ ລາວ ອາດຈະຮ້ອງຂໍການຊ່ວຍເຫຼືອຈາກຕ່າງປະເທດ ຫຼື ສາກົນ ເຂົ້າໃນການຕ້ານອັກຄີໄພ.

ລັດ ສປປ ລາວ ໃຫ້ການຊ່ວຍເຫຼືອບັນດາປະເທດ ທີ່ຮ້ອງຂໍກ່ຽວກັບການຕ້ານອັກຄີໄພ ຕາມເງື່ອນໄຂ ແລະ ຄວາມສາມາດຂອງຕົນ.

## ພາກທີ II
## ການສະກັດກັ້ນ ແລະ ຕ້ານອັກຄີໄພ
### ໝວດທີ 1
### ການສະກັດກັ້ນອັກຄີໄພ

**ມາດຕາ 9 ວິທີການພື້ນຖານໃນການສະກັດກັ້ນອັກຄີໄພ**

ວິທີການພື້ນຖານໃນການສະກັດກັ້ນອັກຄີໄພ ມີ ດັ່ງນີ້:

1. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ໃຫ້ທົ່ວປວງຊົນ ມີສະຕິ ແລະ ເປັນເຈົ້າການເຂົ້າຮ່ວມຂະບວນການ ໃນການສະກັດກັ້ນອັກຄີໄພ ດ້ວຍຮູບການ ແລະ ວິທີການຕ່າງໆ;

2. ສ້າງແຜນສະກັດກັ້ນອັກຄີໄພໄວ້ລ່ວງໜ້າ;

3. ຄຸ້ມຄອງ ວັດຖຸໄວໄຟ, ທາດໄໝ້ລະເບີດ, ແຫຼ່ງໄຟ, ໄຟຟ້າ, ແຫຼ່ງຄວາມຮ້ອນ, ພາຫະນະ, ອຸປະກອນເຕັກນິກ, ວັດຖຸປະກອນ, ເຄື່ອງມື ທີ່ພາໃຫ້ເກີດການໄໝ້ລະເບີດ ຢ່າງເຂັ້ມງວດ, ນໍາໃຊ້ໃຫ້ຖືກຕ້ອງຕາມຫຼັກການ ແລະ ຮັບປະກັນຄວາມປອດໄພ;

4. ມີການຕິດຕາມ ກວດກາ, ປະເມີນຄວາມສ່ຽງ ຢ່າງເປັນປະຈຳ ເພື່ອແກ້ໄຂຂໍ້ຂາດຕົກບົກພ່ອງຢ່າງທັນການ.

**ມາດຕາ 10 (ປັບປຸງ) ແຜນສະກັດກັ້ນອັກຄີໄພ**

ແຜນສະກັດກັ້ນອັກຄີໄພ ຕ້ອງຮັບປະກັນໃຫ້ມີເນື້ອໃນ ດັ່ງນີ້:

1. ລະບຽບການສະກັດກັ້ນອັກຄີໄພ;
2. ແຜນໂຄສະນາ ເຜີຍແຜ່, ແນະນຳ, ກວດກາ, ຕັກເຕືອນບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງກ່ຽວກັບວຽກງານສະກັດກັ້ນອັກຄີໄພ;
3. ແຜນອາດພື້ນທີ່;
4. ແຜນຕິດຕັ້ງລະບົບສະກັດກັ້ນອັກຄີໄພ ເຊັ່ນ ລະບົບ ມອດໄຟ ແລະ ຕັດໄຟຟ້າ ອັດຕະໂນມັດ;
5. ແຜນລະບົບເຕືອນໄພ ແລະ ລະບາຍຄວັນ;
6. ແຜນໜີໄຟ, ທາງໜີໄຟ, ຂັ້ນໄດສຸກເສີນ;
7. ແຜນຕິດຕັ້ງ ອຸປະກອນເຕັກນິກ, ວັດຖຸປະກອນ, ລະບົບທໍ່ອກນ້ຳ ແລະ ສ້າງອ່າງເກັບນ້ຳ;
8. ການກະກຽມ ກຳລັງ, ງົບປະມານ, ພາຫະນະ, ອຸປະກອນເຕັກນິກ, ວັດຖຸປະກອນ ສະກັດກັ້ນອັກຄີໄພ;
9. ແຜນຈັດຕັ້ງການບຳລຸງ ແລະ ຝຶກຊ້ອມກຳລັງ.

ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ກຳນົດເນື້ອໃນລະອຽດ ຂອງແຜນສະກັດກັ້ນອັກຄີໄພໃຫ້ເໝາະສົມກັບແຕ່ລະເປົ້າໝາຍ.

**ມາດຕາ 11 (ປັບປຸງ) ການກວດຜ່ານ ການອອກແບບກ່ຽວກັບຄວາມປອດໄພທາງດ້ານອັກຄີໄພ**

ການຈັດສັນ ໂຄງການກໍ່ສ້າງໃໝ່ ຫຼື ການດັດແປງຜັງເມືອງ, ເຂດຊຸມຊົນ, ເຂດວັດທະນະທຳ, ເຂດເສດຖະກິດ, ເຂດອຸດສາຫະກຳ, ເຂດການຜະລິດ, ເຂດປ່າໄມ້ ຕ້ອງອອກແບບ ຫຼື ດັດແກ້ແຜນສະກັດກັ້ນອັກຄີໄພເພື່ອຮັບປະກັນຄວາມປອດໄພ ແລະ ໃຫ້ປະຕິບັດ ດັ່ງນີ້:

1. ກຳນົດພື້ນທີ່ຈັດສັນ ແລະ ຂອບເຂດການກໍ່ສ້າງ;
2. ຕ້ອງມີລະບົບເສັ້ນທາງຄົມມະນາຄົມ ແລະ ແຫຼ່ງນ້ຳ;
3. ຕ້ອງຈັດວາງສະຖານທີ່ໃຫ້ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຢ່າງເໝາະສົມ;
4. ຕ້ອງຂຶ້ນແຜນງົບປະມານ, ພາຫະນະ, ອຸປະກອນເຕັກນິກ, ວັດຖຸປະກອນ ສະກັດກັ້ນອັກຄີໄພ;
5. ມີວິທີການ ເພື່ອຮັບໃຊ້ວຽກງານສະກັດກັ້ນອັກຄີໄພ.

ໂຄງການກໍ່ສ້າງໃໝ່, ການດັດແປງ ຫຼື ປ່ຽນແປງລັກສະນະນຳໃຊ້ ຕ້ອງອອກແບບ ຫຼື ດັດແກ້ ແຜນສະກັດກັ້ນອັກຄີໄພ ເພື່ອຮັບປະກັນຄວາມປອດໄພ ແລະ ໃຫ້ປະຕິບັດ ດັ່ງນີ້:

1. ຕ້ອງມີໄລຍະຫ່າງລະຫວ່າງສະຖານທີ່ກໍ່ສ້າງ;
2. ມີລະບົບສະກັດກັ້ນອັກຄີໄພ;
3. ມີລະບົບທາງໜີໄຟ;
4. ຕ້ອງມີງົບປະມານ, ພາຫະນະ, ອຸປະກອນເຕັກນິກ, ວັດຖຸປະກອນ ສະກັດກັ້ນອັກຄີໄພ;
5. ມີວິທີການ ເພື່ອຮັບໃຊ້ວຽກງານສະກັດກັ້ນອັກຄີໄພ.

ໂຄງການກໍ່ສ້າງໃໝ່ ຫຼື ການດັດແປງ ທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ແລະ ວັກທີສອງ ຂອງມາດຕານີ້ ຕ້ອງໄດ້ຮັບການກວດຜ່ານ ນຳກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ແລະ ຂະແໜງການທີ່ກ່ຽວຂ້ອງຕາມການແບ່ງຂັ້ນຄຸ້ມຄອງ ເພື່ອຮັບປະກັນຄວາມປອດໄພທາງດ້ານອັກຄີໄພ.

**ມາດຕາ 12 (ປັບປຸງ) ການສະກັດກັ້ນອັກຄີໄພ ໃນການກໍ່ສ້າງ ແລະ ນຳໃຊ້ກິດຈະການ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ຢູ່ ສປປ ລາວ ກ່ອນຈະດຳເນີນການກໍ່ສ້າງ ແລະ ນຳໃຊ້ກິດຈະການ ທີ່ມີຄວາມສ່ຽງຕໍ່ການໄໝ້ລະເບີດ ຕ້ອງນຳເອົາແຜນຜັງໂຄງການ ແລະ ແຜນສະກັດກັ້ນອັກຄີໄພ ໄປກວດຜ່ານ ແລະ ຢັ້ງຢືນ ຈາກກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ.

**ມາດຕາ 13 (ປັບປຸງ) ເປົ້າໝາຍໃນການສະກັດກັ້ນອັກຄີໄພ**

ເປົ້າໝາຍໃນການສະກັດກັ້ນອັກຄີໄພ ມີ ດັ່ງນີ້:

1. ທີ່ຢູ່ອາໄສ ແລະ ເຂດຊຸມຊົນ;
2. ພາຫະນະຂົນສົ່ງ;
3. ສຳນັກງານ, ອົງການ;
4. ອາຄານສູງ;
5. ໂຮງຈັກ, ໂຮງງານ;
6. ໂຮງແຮມ, ສະຖານທີ່ກາຊີໂນ, ສະຖານທີ່ບັນເທີງ, ເຮືອນພັກ, ສະຖານທີ່ໂຮມຊຸມນຸມ, ໂຮງຮຽນ ແລະ ໂຮງໝໍ;
7. ກິດຈະການ ເທິງໜ້ານ້ຳ ແລະ ໃຕ້ດິນ;
8. ການຜະລິດ, ການຈຳໜ່າຍໄຟຟ້າ, ການນຳເຂົ້າ ແລະ ການຕິດຕັ້ງວັດຖຸປະກອບໄຟຟ້າ;
9. ຕະຫຼາດ, ສູນການຄ້າ, ໂຮງສາຍຮູບເງົາ ແລະ ລະບົບສາງ;
10. ເຂດເສດຖະກິດ;
11. ທ່າເຮືອ, ສະຖານີລົດຂົນສົ່ງໂດຍສານ, ສະຖານີລົດໄຟ ແລະ ສະໜາມກິລາ;
12. ດ່ານເຂົ້າ-ອອກ ສປປ ລາວ ແລະ ສະໜາມບິນ;
13. ເຂດປ່າໄມ້;
14. ວັດຖຸໄວໄຟ ຫຼື ທາດໄໝ້ລະເບີດ;
15. ເປົ້າໝາຍອື່ນ.

**ມາດຕາ 14 (ປັບປຸງ) ການສະກັດກັ້ນອັກຄີໄພ ໃນທີ່ຢູ່ອາໄສ ແລະ ເຂດຊຸມຊົນ**

ການສະກັດກັ້ນອັກຄີໄພ ໃນທີ່ຢູ່ອາໄສ ແລະ ເຂດຊຸມຊົນ ໃຫ້ປະຕິບັດ ດັ່ງນີ້:

1. ຕິດຕັ້ງລະບົບໄຟຟ້າໃຫ້ຖືກຕ້ອງຕາມເຕັກນິກ, ກະກຽມອຸປະກອນເຕັກນິກ, ວັດຖຸປະກອບ, ເງື່ອນໄຂຕ່າງໆ ເພື່ອກຽມພ້ອມສະກັດກັ້ນອັກຄີໄພ;
2. ຮັບປະກັນຄວາມປອດໄພ ໃນການນຳໃຊ້ ເຕົາໄຟ, ເຄື່ອງໃຊ້ໄຟຟ້າ, ສະຖານທີ່ຈູດຂີ້ເຫຍື້ອ ແລະ ການໄຕ້ ທູບ ທຽນ ຢູ່ຮ້ານບູຊາ;
3. ຈັດວາງບັນດາວັດຖຸໄວໄຟ ຫຼື ທາດໄໝ້ລະເບີດ ຫ່າງໄກຈາກແຫຼ່ງໄຟ ແລະ ແຫຼ່ງຄວາມຮ້ອນ;
4. ມີລະບຽບການສະກັດກັ້ນອັກຄີໄພ ໂດຍສະເພາະການນຳໃຊ້ໄຟ, ໄຟຟ້າ ແລະ ທາດໄໝ້ລະເບີດ;
5. ມີ ວິທີການ, ແຜນການ, ກຳລັງ, ພາຫະນະ, ອຸປະກອນເຕັກນິກ, ວັດຖຸປະກອບ, ເສັ້ນທາງ ແລະ ແຫຼ່ງນ້ຳ ເພື່ອສະກັດກັ້ນບໍ່ໃຫ້ໄຟໄໝ້ລາມ.

**ມາດຕາ 15 (ປັບປຸງ) ການສະກັດກັ້ນອັກຄີໄພ ໃນພາຫະນະຂົນສົ່ງ**

ພາຫະນະບັນທຸກ ວັດຖຸໄວໄຟ, ທາດໄໝ້ລະເບີດ, ພາຫະນະຂົນສົ່ງສິນຄ້າອື່ນ ແລະ ພາຫະນະຂົນສົ່ງ ຜູ້ໂດຍສານ ທີ່ນຳໃຊ້ ນ້ຳມັນ, ອາຍແກັດ ແລະ ໄຟຟ້າ ແຕ່ສີ່ບ່ອນນັ່ງຂຶ້ນໄປ ຕ້ອງມີບັ້ງມອດໄຟ ແລະ ປະຕິບັດ ຕາມລະບຽບການທີ່ກ່ຽວຂ້ອງ.

ພາຫະນະຂົນສົ່ງ ວັດຖຸໄວໄຟ, ທາດໄໝ້ລະເບີດ, ແຮ່ທາດ ທີ່ປະກອບ ຫຼື ດັດແປງໃໝ່ ຕ້ອງໄດ້ຂໍອະນຸຍາດ ນຳກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ແລະ ຂະແໜງການທີ່ກ່ຽວຂ້ອງ.

ພາຫະນະຂົນສົ່ງທຸກປະເພດ ຂອງອົງການຈັດຕັ້ງສາກົນ, ຄົນຕ່າງປະເທດທີ່ນຳເຂົ້າ ສປປ ລາວ ຕ້ອງຮັບປະກັນຄວາມປອດໄພ ທາງດ້ານອັກຄີໄພ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

### ມາດຕາ 16 (ປັບປຸງ) ການສະກັດກັ້ນອັກຄີໄພ ໃນສຳນັກງານ, ອົງການ

ການສະກັດກັ້ນອັກຄີໄພ ໃນສຳນັກງານ, ອົງການ ໃຫ້ປະຕິບັດ ດັ່ງນີ້:

1. ສ້າງແຜນ ສະກັດກັ້ນອັກຄີໄພ;
2. ຕິດຕັ້ງລະບົບສັນຍານເຕືອນໄຟໄໝ້;
3. ມີລະບົບສະກັດກັ້ນອັກຄີໄພ ເປັນຕົ້ນ ລະບົບ ມອດໄຟ, ຕັດໄຟຟ້າ ອັດຕະໂນມັດ ແລະ ລະບົບກ໋ອກນໍ້າມອດໄຟ;
4. ກະກຽມກຳລັງ, ພາຫະນະ, ອຸປະກອນເຕັກນິກ, ວັດຖຸປະກອນ, ແຫຼ່ງນໍ້າ;
5. ມີແຜນງົບປະມານ ເພື່ອຮັບໃຊ້ການສະກັດກັ້ນອັກຄີໄພ;
6. ມີເອກະສານຕິດຕາມ, ຄຸ້ມຄອງການປະຕິບັດໜ້າທີ່ ໃນການສະກັດກັ້ນອັກຄີໄພ.

### ມາດຕາ 17 (ປັບປຸງ) ການສະກັດກັ້ນອັກຄີໄພ ໃນອາຄານສູງ

ອາຄານສູງ ຕ້ອງມີ ແຜນ ແລະ ລະບົບ ສະກັດກັ້ນອັກຄີໄພ ຢ່າງຄົບຖ້ວນ ເຊັ່ນ ບັ້ງມອດໄຟ, ລະບົບເຕືອນໄພ, ລະບົບເຕືອນຄວັນ, ລະບົບລະບາຍຄວັນ, ລະບົບຕັດໄຟຟ້າອັດຕະໂນມັດ, ລະບົບກ໊ອກນໍ້າມອດໄຟ, ລະບົບປ້ຳນໍ້າມອດໄຟ, ອ່າງນໍ້າ, ລະບົບມອດໄຟອັດຕະໂນມັດ, ທາງໜີໄຟ, ຂັ້ນໄດສຸກເສີນ, ໄຟສຸກເສີນ, ໄຟເບື້ອງທາງ, ແຜນກູ້ໄພ, ປ້າຍ ຫຼື ສັນຍາລັກ ຊີ້ບອກທາງໜີໄຟ, ຜັງໜີໄພ ແລະ ຕ້ອງຮັບປະກັນການມອດໄຟໃນເບື້ອງຕົ້ນດ້ວຍຕົນເອງ.

### ມາດຕາ 18 (ໃໝ່) ການສະກັດກັ້ນອັກຄີໄພ ໃນໂຮງຈັກ, ໂຮງງານ

ໂຮງຈັກ, ໂຮງງານ ຕ້ອງມີ ແຜນ ແລະ ລະບົບ ສະກັດກັ້ນອັກຄີໄພ ຢ່າງຄົບຖ້ວນ ເຊັ່ນ ບັ້ງມອດໄຟ, ລະບົບລະບາຍຄວັນ, ລະບົບເຕືອນໄພ, ແຜນໜີໄຟ, ມີ ປ້າຍ ຫຼື ສັນຍາລັກ ຊີ້ບອກທາງໜີໄຟ ແລະ ມີກຳລັງໃຫ້ການແນະນຳທາງອອກສຸກເສີນ, ຊ່ວຍເຫຼືອບຸກຄົນທີ່ບໍ່ມີຄວາມສາມາດໜີໄຟດ້ວຍຕົນເອງ, ມີແຜນການສົມທົບກັບກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ໃນການຝຶກຊ້ອມ ສະກັດກັ້ນອັກຄີໄພ, ໜີໄຟ, ຊ່ວຍເຫຼືອຄົນ, ກອບກູ້ຊັບສິນ ແລະ ສະກັດກັ້ນໄຟໄໝ້ລາມ.

### ມາດຕາ 19 (ປັບປຸງ) ການສະກັດກັ້ນອັກຄີໄພ ໃນໂຮງແຮມ, ສະຖານທີ່ກາຊີໂນ, ສະຖານທີ່ບັນເທີງ, ເຮືອນພັກ, ສະຖານທີ່ໂຮມຊຸມນຸມ, ໂຮງຮຽນ ແລະ ໂຮງໝໍ

ໂຮງແຮມ, ສະຖານທີ່ກາຊີໂນ, ສະຖານທີ່ບັນເທີງ, ເຮືອນພັກ, ສະຖານທີ່ໂຮມຊຸມນຸມ, ໂຮງຮຽນ ແລະ ໂຮງໝໍ ຕ້ອງມີ ແຜນ ແລະ ລະບົບ ສະກັດກັ້ນອັກຄີໄພ ຢ່າງຄົບຖ້ວນ ເຊັ່ນ ລະບົບລະບາຍຄວັນ, ລະບົບເຕືອນໄພ, ໄຟສຸກເສີນ, ບັ້ງມອດໄຟ, ແຜນໜີໄຟ, ມີ ປ້າຍ ຫຼື ສັນຍາລັກ ຊີ້ບອກທາງໜີໄຟ ແລະ ມີກຳລັງໃຫ້ການແນະນຳທາງອອກສຸກເສີນ, ຊ່ວຍເຫຼືອບຸກຄົນທີ່ບໍ່ມີຄວາມສາມາດໜີໄຟດ້ວຍຕົນເອງ, ມີແຜນການສົມທົບກັບກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ໃນການຝຶກຊ້ອມ ສະກັດກັ້ນອັກຄີໄພ, ໜີໄຟ, ຊ່ວຍເຫຼືອຄົນ, ກອບກູ້ຊັບສິນ ແລະ ສະກັດກັ້ນໄຟໄໝ້ລາມ.

### ມາດຕາ 20 (ປັບປຸງ) ການສະກັດກັ້ນອັກຄີໄພ ໃນກິດຈະການເທິງໜ້ານໍ້າ ແລະ ໃຕ້ດິນ

ການດຳເນີນກິດຈະການ ເທິງໜ້ານໍ້າ ທີ່ມີຄວາມເປັນອັນຕະລາຍເຖິງການໄໝ້ລະເບີດ ຕ້ອງມີ ເອກະສານ ຫຼື ຄູ່ມື ຄຸ້ມຄອງການສະກັດກັ້ນອັກຄີໄພ, ສ້າງແຜນ ແລະ ຝຶກຊ້ອມ ສະກັດກັ້ນອັກຄີໄພ, ໜີໄຟ,

ຊ່ວຍເຫຼືອຄົນ, ກອບກູ້ຊັບສິນ ແລະ ສະກັດກັ້ນໄຟໄໝ້ລາມ, ມີ ກຳລັງ, ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ເພື່ອສະກັດກັ້ນອັກຄີໄພ.

ການດຳເນີນກິດຈະການໃຕ້ດິນ, ກິດຈະການຂຸດຄົ້ນຊັບພະຍາກອນທຳມະຊາດຕ່າງໆ ຕ້ອງຕິດຕັ້ງລະບົບສະກັດກັ້ນອັກຄີໄພ, ແຜນໜີໄຟ, ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ເຊັ່ນ ເຄື່ອງເຕືອນໄພອັດຕະໂນມັດ, ເຄື່ອງແກ້ໄຂທາດອາຍ, ທາດເບື່ອ, ລະບົບລະບາຍຄວັນ, ລະບົບລະບາຍອາກາດ ແລະ ຮັບປະກັນການເຂົ້າ-ອອກ ຂອງກຳລັງ ແລະ ພາຫະນະ.

**ມາດຕາ 21 (ປັບປຸງ) ການສະກັດກັ້ນອັກຄີໄພ ໃນການຜະລິດ, ການຈຳໜ່າຍໄຟຟ້າ, ການນຳເຂົ້າ ແລະ ການຕິດຕັ້ງອັດຖຸປະກອນໄຟຟ້າ**

ການສະກັດກັ້ນອັກຄີໄພ ໃນການຜະລິດ, ການຈຳໜ່າຍໄຟຟ້າ, ການນຳເຂົ້າ ແລະ ການຕິດຕັ້ງວັດຖຸປະກອນໄຟຟ້າ ມີ ດັ່ງນີ້:

1. ເອກະສານ ຫຼື ຄູ່ມື ຄຸ້ມຄອງການສະກັດກັ້ນອັກຄີໄພ ຕ້ອງໃຫ້ມີຢ່າງຄົບຖ້ວນ;

2. ໂຮງງານຜະລິດໄຟຟ້າ, ສະຖານີຈ່າຍກະແສໄຟຟ້າ, ໝໍ້ແປງໄຟຟ້າ, ການຕິດຕັ້ງໄຟຟ້າ ລວມທັງການນຳໃຊ້ໄຟຟ້າ ຕ້ອງມີວິທີການສະກັດກັ້ນ ເພື່ອບໍ່ໃຫ້ອັກຄີໄພເກີດຂຶ້ນ;

3. ວັດຖຸປະກອນໄຟຟ້າ ທີ່ນຳໃຊ້ໃນສະຖານທີ່ ທີ່ມີຄວາມສ່ຽງຕໍ່ການໄໝ້ລະເບີດ ຕ້ອງໃຫ້ມີຄຸນນະພາບ, ໄດ້ມາດຕະຖານເຕັກນິກໄຟຟ້າຂອງລາວ ແລະ ຮັບປະກັນຄວາມປອດໄພ;

4. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ສະໜອງໄຟຟ້າ ຫຼື ຕິດຕັ້ງວັດຖຸປະກອນໄຟຟ້າ ຕ້ອງຮັບຜິດຊອບທາງດ້ານມາດຕະຖານເຕັກນິກໄຟຟ້າຂອງລາວ ພ້ອມທັງ ແນະນຳວິທີການນຳໃຊ້ ແລະ ຮັກສາຄວາມປອດໄພໃຫ້ຜູ້ຊົມໃຊ້;

5. ການຜະລິດ ຫຼື ນຳເຂົ້າ ວັດຖຸປະກອນໄຟຟ້າ ຕ້ອງໄດ້ຮັບການກວດກາ ແລະ ຢັ້ງຢືນຄຸນນະພາບຂອງຜະລິດຕະພັນ ຈາກຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 22 (ປັບປຸງ) ການສະກັດກັ້ນອັກຄີໄພ ໃນຕະຫຼາດ, ສູນການຄ້າ, ໂຮງສາຍຮູບເງົາ ແລະ ລະບົບສາງ**

ການສະກັດກັ້ນອັກຄີໄພ ໃນຕະຫຼາດ, ສູນການຄ້າ, ໂຮງສາຍຮູບເງົາ ແລະ ລະບົບສາງ ໃຫ້ປະຕິບັດດັ່ງນີ້:

1. ມີແຜນ ສະກັດກັ້ນອັກຄີໄພ;

2. ມີລະບົບນ້ຳ ແລະ ບັ້ງມອດໄຟ ໂດຍອີງໃສ່ສະພາບແວດລ້ອມ ຂອງສະຖານທີ່ ຕາມຄວາມເໝາະສົມ;

3. ແຍກໄຟຟ້າອອກເປັນລະບົບສະເພາະ ຄື ລະບົບໄຟຟ້າຮັບໃຊ້ ທຸລະກິດ, ລະບົບສາງ ແລະ ຊີວິດປະຈຳວັນ;

4. ຈັດສັນພື້ນທີ່, ເຄື່ອງ, ສິນຄ້າໃຫ້ເປັນລະບົບ ເພື່ອຮັບປະກັນຄວາມປອດໄພທາງດ້ານອັກຄີໄພ;

5. ຮັບປະກັນຄວາມປອດໄພ ໃນການນຳໃຊ້ເຕົາໄຟ, ຮ້ານບູຊາ.

ສຳລັບ ການເກັບມ້ຽນວັດຖຸໄວໄຟ, ທາດໄໝ້ລະເບີດ ຕ້ອງຈັດວາງໃຫ້ເປັນລະບົບສະເພາະ ແລະ ໃຫ້ມີລະບົບສະກັດກັ້ນອັກຄີໄພ ທີ່ທັນສະໄໝ.

**ມາດຕາ 23 (ໃໝ່) ການສະກັດກັ້ນອັກຄີໄພ ໃນເຂດເສດຖະກິດ**

ເຂດເສດຖະກິດ ຕ້ອງມີ ແຜນສະກັດກັ້ນອັກຄີໄພຢ່າງຄົບຖ້ວນ, ແຜນງົບປະມານສະເພາະ ແລະ ມີແຜນການສົມທົບກັບກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ໃນການຝຶກຊ້ອມ ສະກັດກັ້ນອັກຄີໄພ, ໜີໄຟ, ຊ່ວຍເຫຼືອຄົນ, ກອບກູ້ຊັບສິນ ແລະ ສະກັດກັ້ນໄຟໄໝ້ລາມ.

ການສະກັດກັ້ນອັກຄີໄພ ຕ້ອງຈັດຕັ້ງກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພອາຊີບ, ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນອັກຄີໄພ, ມີແຜນໜີໄຟ, ແຜນລະບາຍພາຫະນະ, ແຜນເຄື່ອນຍ້າຍຄົນ ແລະ ຍົກຍ້າຍວັດຖຸເຄື່ອງຂອງ.

ຄະນະຄຸ້ມຄອງເຂດ ແລະ ຜູ້ພັດທະນາ ຕ້ອງຊຸກຍູ້ ແລະ ຕິດຕາມ ຜູ້ລົງທຶນໃນເຂດ ໃຫ້ປະຕິບັດຕາມກົດໝາຍສະບັບນີ້ ແລະ ລະບຽບການກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ.

**ມາດຕາ 24 (ປັບປຸງ) ການສະກັດກັ້ນອັກຄີໄພ ໃນທ່າເຮືອ, ສະຖານີລົດຂົນສົ່ງໂດຍສານ, ສະຖານີລົດໄຟ ແລະ ສະໜາມກິລາ**

ທ່າເຮືອ, ສະຖານີລົດຂົນສົ່ງໂດຍສານ, ສະຖານີລົດໄຟ ແລະ ສະໜາມກິລາ ຕ້ອງມີແຜນ ແລະ ລະບົບສະກັດກັ້ນອັກຄີໄພຢ່າງຄົບຖ້ວນ, ແຜນງົບປະມານສະເພາະ ແລະ ມີແຜນການສົມທົບກັບກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ໃນການຝຶກຊ້ອມ ສະກັດກັ້ນອັກຄີໄພ, ໜີໄຟ, ຊ່ວຍເຫຼືອຄົນ, ກອບກູ້ຊັບສິນ ແລະ ສະກັດກັ້ນໄຟໄໝ້ລາມ.

ການສະກັດກັ້ນອັກຄີໄພ ຕ້ອງຈັດຕັ້ງກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ, ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນອັກຄີໄພ, ມີແຜນໜີໄຟ, ແຜນລະບາຍພາຫະນະ, ແຜນເຄື່ອນຍ້າຍຜູ້ໂດຍສານ ແລະ ຍົກຍ້າຍວັດຖຸເຄື່ອງຂອງ ແລະ ສິນຄ້າ.

**ມາດຕາ 25 (ປັບປຸງ) ການສະກັດກັ້ນອັກຄີໄພ ໃນ ດ່ານເຂົ້າ-ອອກ ສປປ ລາວ ແລະ ສະໜາມບິນ**

ການສະກັດກັ້ນອັກຄີໄພ ໃນ ດ່ານເຂົ້າ-ອອກ ສປປ ລາວ ແລະ ສະໜາມບິນ ໃຫ້ປະຕິບັດ ດັ່ງນີ້:

1. ມີແຜນສະກັດກັ້ນອັກຄີໄພ;
2. ຈັດສັນພື້ນທີ່ ສະກັດກັ້ນອັກຄີໄພ, ມີແຜນໜີໄຟ, ແຜນລະບາຍພາຫະນະ, ແຜນເຄື່ອນຍ້າຍຄົນ ແລະ ຍົກຍ້າຍວັດຖຸເຄື່ອງຂອງ ແລະ ສິນຄ້າ;
3. ຈັດຕັ້ງໃຫ້ມີກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພອາຊີບ ແລະ ມີການຝຶກຊ້ອມ ສະກັດກັ້ນອັກຄີໄພ, ໜີໄຟ, ຊ່ວຍເຫຼືອຄົນ, ກອບກູ້ຊັບສິນ ແລະ ສະກັດກັ້ນໄຟໄໝ້ລາມ ຢ່າງເປັນປະຈຳ;
4. ຕ້ອງປະກອບ ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນອັກຄີໄພ ແລະ ກູ້ໄພ ທີ່ທັນສະໄໝ;
5. ຕິດຕັ້ງລະບົບສະກັດກັ້ນອັກຄີໄພ ໃນອາຄານ ສະຖານທີ່ຕ່າງໆ ໃນສະໜາມບິນຢ່າງຄົບຊຸດ ແລະ ພຽງພໍ;
6. ປະສານສົມທົບວຽກງານວິຊາສະເພາະ ກັບກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ຢ່າງເປັນປະຈຳ;
7. ມີແຜນງົບປະມານສະເພາະ ເພື່ອຮັບໃຊ້ການສະກັດກັ້ນອັກຄີໄພ.

**ມາດຕາ 26 (ປັບປຸງ) ການສະກັດກັ້ນອັກຄີໄພ ໃນເຂດປ່າໄມ້**

ການສະກັດກັ້ນອັກຄີໄພ ໃນເຂດປ່າໄມ້ ໃຫ້ປະຕິບັດ ດັ່ງນີ້:

1. ໜ່ວຍງານທີ່ກ່ຽວຂ້ອງ ຂອງຂະແໜງປ່າໄມ້ ຕ້ອງສ້າງແຜນ ໂດຍເລີ່ມຈາກການກຳນົດລະບຽບການ ແລະ ມາດຕະການທີ່ຈຳເປັນ ເພື່ອຕິດຕາມ ແລະ ເຝົ້າລະວັງ;
2. ໜ່ວຍງານທີ່ກ່ຽວຂ້ອງດັ່ງກ່າວ ຕ້ອງຮັບປະກັນໃຫ້ມີການສຳຫຼວດໃນເຂດປ່າໄມ້ ບໍລິເວນທີ່ມີຄວາມສ່ຽງເກີດໄຟໄໝ້ຕາມລະດູການ ເພື່ອວາງແຜນກະກຽມຄວາມພ້ອມສະກັດກັ້ນອັກຄີໄພ ແລະ ການຕິດຕາມ, ການກຳນົດຄວາມພ້ອມໃນເຂດປ່າໄມ້, ກຳນົດເສັ້ນທາງ ແລະ ແລວທາງ;
3. ສຳນັກງານ, ອົງການ, ບ້ານ, ເຮືອນ, ເສັ້ນທາງຄົມມະນາຄົມ, ທາງທໍ່ສົ່ງທາດທີ່ມີຄວາມສ່ຽງຕໍ່ການໄໝ້ລະເບີດ ທີ່ຕັ້ງຢູ່ແຄມປ່າ ຫຼື ຢູ່ໃນປ່າ ຕ້ອງຮັບປະກັນໄລຍະຫ່າງໃຫ້ຖືກຕ້ອງ ຕາມມາດຕະຖານເຕັກນິກຄວາມປອດໄພທາງດ້ານອັກຄີໄພ;

4. ສາຍໄຟຟ້າແຮງສູງທີ່ເນັ່ງຜ່ານປ່າ ຕ້ອງຮັບປະກັນຄວາມສູງ ແລະ ໄລຍະຫ່າງ ຕາມມາດຕະຖານເຕັກນິກຄວາມປອດໄພທາງດ້ານອັກຄີໄພ;

5. ການດັງໄຟ, ສູບຢາ ຫຼື ນໍາໃຊ້ໄຟທຸກກໍລະນີໃນເຂດປ່າໄມ້ ຕ້ອງລະມັດລະວັງ ແລະ ຮັບຜິດຊອບໃນການດັບມອດ ກ່ອນອອກຈາກປ່າໄມ້;

6. ການເຜົາຖ່ານ, ການເຮັດໄຮ່, ການເຮັດສວນ, ການຈູດບັ້ງໄຟ ແລະ ອື່ນໆ ຕ້ອງມີສະຕິປ້ອງກັນໄຟໄໝ້ລາມປ່າ ແລະ ມີແຜນການດັບມອດຢ່າງຄັກແນ່.

**ມາດຕາ 27 (ປັບປຸງ) ການສະກັດກັ້ນອັກຄີໄພ ກ່ຽວກັບວັດຖຸໄວໄຟ ຫຼື ທາດໄໝ້ລະເບີດ**

ການສະກັດກັ້ນອັກຄີໄພ ກ່ຽວກັບວັດຖຸໄວໄຟ ຫຼື ທາດໄໝ້ລະເບີດ ໃຫ້ປະຕິບັດ ດັ່ງນີ້:

1. ແຜນສະກັດກັ້ນອັກຄີໄພ ຕ້ອງກໍານົດໃຫ້ຊັດເຈນ;

2. ສະຖານທີ່ຊຸດຄົ້ນວັດຖຸໄວໄຟ ຕ້ອງຕິດຕັ້ງລະບົບເຕືອນໄພ, ວັດຖຸປະກອນ ແກ້ໄຂການຮົ່ວໄຫຼ ທີ່ທັນສະໄໝ ແລະ ມີໜ່ວຍງານຮັກສາຄວາມປອດໄພ ທີ່ເຂັ້ມງວດ;

3. ການຜະລິດ, ປຸງແຕ່ງ, ຂົນສົ່ງຜະລິດຕະພັນນໍ້າມັນ, ອາຍແກັດ ແລະ ທາດໄໝ້ລະເບີດ ຕ້ອງມີລະບົບເຕືອນໄພ ແລະ ມາດຕະການແກ້ໄຂຢ່າງທັນການ;

4. ປໍ້ານໍ້າມັນ, ປໍ້າອາຍແກັດ ຫຼື ຮ້ານຈໍາໜ່າຍອາຍແກັດ ຕ້ອງປະຕິບັດຕາມລະບຽບການ ກ່ຽວກັບມາດຕະຖານເຕັກນິກ ແລະ ຮັບປະກັນຄວາມປອດໄພທາງດ້ານອັກຄີໄພ;

5. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດໍາເນີນທຸລະກິດກ່ຽວກັບວັດຖຸໄວໄຟ ຫຼື ທາດໄໝ້ລະເບີດ ຕ້ອງມີໜັງສືຢັ້ງຢືນການກວດກາ ຈາກກໍາລັງຕໍາຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ, ຕິດກາໝາຍຄໍາເຕືອນ, ສະຫຼາກສານເຄມີ ເປັນ ພາສາລາວ ແລະ ພາສາຕ່າງປະເທດ;

6. ຜູ້ເຮັດວຽກໃນສະຖານທີ່ ທີ່ມີຄວາມສ່ຽງຕໍ່ການໄໝ້ລະເບີດ ຕ້ອງໄດ້ຜ່ານການຝຶກອົບຮົມ ແລະ ມີໃບຢັ້ງຢືນ ຈາກກໍາລັງຕໍາຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ;

7. ພາຫະນະຂົນສົ່ງ ຫຼື ວັດຖຸປະກອນບັນຈຸ ນໍ້າມັນ, ອາຍແກັດ ແລະ ທາດໄໝ້ລະເບີດ ຕ້ອງໄດ້ມາດຕະຖານເຕັກນິກ;

8. ຕ້ອງມີແຜນງົບປະມານສະເພາະ ເພື່ອຮັບໃຊ້ການສະກັດກັ້ນອັກຄີໄພ.

**ມາດຕາ 28 (ປັບປຸງ) ການໂຈະ ແລະ ຢຸດເຊົາການເຄື່ອນໄຫວກິດຈະການ**

ຂະແໜງການປ້ອງກັນຄວາມສະຫງົບ ສະເໜີຂະແໜງການອື່ນທີ່ກ່ຽວຂ້ອງ ພິຈາລະນາການໂຈະການເຄື່ອນໄຫວກິດຈະການຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເມື່ອມີສາເຫດໃດໜຶ່ງ ດັ່ງນີ້:

1. ມີຄວາມສ່ຽງຕໍ່ການໄໝ້ລະເບີດ;

2. ລະເມີດລະບຽບການ ກ່ຽວກັບການສະກັດກັ້ນອັກຄີໄພ ຢ່າງຮ້າຍແຮງ;

3. ລະເມີດລະບຽບການ ກ່ຽວກັບການສະກັດກັ້ນອັກຄີໄພ ທີ່ກໍາລັງຕໍາຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ໄດ້ກ່າວເຕືອນມາແລ້ວ ສອງຄັ້ງ ແຕ່ຫາກຍັງບໍ່ປະຕິບັດຕາມ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຖືກໂຈະການເຄື່ອນໄຫວກິດຈະການແລ້ວນັ້ນ ຕ້ອງໄດ້ປັບປຸງ ຫຼື ແກ້ໄຂ ຕາມສາເຫດຂອງການໂຈະ, ໃນກໍລະນີບໍ່ມີການປັບປຸງ ຫຼື ແກ້ໄຂ ກໍຈະຖືກຢຸດເຊົາການເຄື່ອນໄຫວ.

**ມາດຕາ 29 (ປັບປຸງ) ການປະກັນໄພອັກຄີໄພ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດໍາເນີນກິດຈະການທີ່ມີຄວາມສ່ຽງຕໍ່ການໄໝ້ລະເບີດ ຕ້ອງມີການປະກັນໄພອັກຄີໄພ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການປະກັນໄພ.

## ໝວດທີ 2
## ການຕ້ານອັກຄີໄພ

**ມາດຕາ 30 (ປັບປຸງ) ວິທີການພື້ນຖານໃນການຕ້ານອັກຄີໄພ**

ວິທີການພື້ນຖານໃນການຕ້ານອັກຄີໄພ ໃຫ້ປະຕິບັດ ດັ່ງນີ້:

1. ເຈົ້າຂອງສະຖານທີ່ບ່ອນເກີດເຫດໄຟໄໝ້ ຕ້ອງເປັນເຈົ້າການມອດໄຟ ພ້ອມທັງຮ້ອງຂໍຄວາມຊ່ວຍເຫຼືອຈາກຜູ້ຢູ່ໃກ້ຄຽງ ແລະ ແຈ້ງໃຫ້ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ໃນທັນໃດ;

2. ການລະດົມກຳລັງ, ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ເພື່ອຊ່ວຍຕ້ານອັກຄີໄພທີ່ພວມເກີດຂຶ້ນນັ້ນ ຕ້ອງເຮັດຢ່າງຮີບດ່ວນ;

3. ການຈັດຕັ້ງກຳລັງ ໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ກອບກູ້ຊັບສິນ ແລະ ຕ້ານໄຟໄໝ້ລາມຕ້ອງດຳເນີນຢ່າງທັນການ;

4. ການບັນຊາຕ້ານອັກຄີໄພ ຕ້ອງເປັນເອກະພາບ.

**ມາດຕາ 31 ແຜນຕ້ານອັກຄີໄພ**

ແຜນຕ້ານອັກຄີໄພ ຕ້ອງຮັບປະກັນໃຫ້ມີເນື້ອໃນ ດັ່ງນີ້:

1. ສ້າງແຜນວາດຂອບເຂດຂອງສຳນັກງານ, ອົງການ, ບ້ານ;
2. ກຳນົດເສັ້ນທາງເຂົ້າ-ອອກ;
3. ຄາດຄະເນຈຸດທີ່ມີຄວາມສ່ຽງຕໍ່ການໄໝ້ລະເບີດ;
4. ກຳນົດແຜນກູ້ໄພ, ຊ່ວຍຜູ້ຖືກເຄາະຮ້າຍ, ເຄື່ອນຍ້າຍ ແລະ ປົກປັກຮັກສາວັດຖຸສິ່ງຂອງ;
5. ກຳນົດແຜນຈັດວາງ ກຳລັງ, ພາຫະນະ, ອຸປະກອນເຕັກນິກ, ວັດຖຸປະກອນ ແລະ ກຳນົດແຫຼ່ງນ້ຳມອດໄຟ;
6. ກຳນົດຍຸດທະວິທີໃນການຕ້ານອັກຄີໄພ ໃຫ້ເໝາະສົມກັບສະຖານທີ່ຕົວຈິງ;
7. ສ້າງແຜນລະດົມ ກຳລັງ, ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ເພື່ອຕ້ານອັກຄີໄພ ໃນກໍລະນີເກີດອັກຄີໄພ ຢ່າງຮ້າຍແຮງ;
8. ສ້າງແຜນງົບປະມານຮັບໃຊ້ການຕ້ານອັກຄີໄພ.

**ມາດຕາ 32 (ປັບປຸງ) ການສ້າງແຜນ ແລະ ການຝຶກຊ້ອມ ການຕ້ານອັກຄີໄພ**

ສຳນັກງານ, ອົງການ ແລະ ຜູ້ດຳເນີນກິດຈະການ ຕ້ອງສ້າງແຜນຕ້ານອັກຄີໄພ ແລະ ດຳເນີນການຝຶກຊ້ອມ ການຕ້ານອັກຄີໄພ ໂດຍມີການປະສານສົມທົບ ກັບກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ.

**ມາດຕາ 33 (ປັບປຸງ) ການດຳເນີນການຕ້ານອັກຄີໄພ**

ການດຳເນີນການຕ້ານອັກຄີໄພ ໃຫ້ປະຕິບັດ ດັ່ງນີ້:

1. ຈັດກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພໃຫ້ພຽງພໍ ແລະ ອອກປະຕິບັດໜ້າທີ່ໃຫ້ທັນການ ແລະ ມີປະສິດທິຜົນ;

2. ຈັດ ເຄື່ອງນຸ່ງວິຊາສະເພາະຕ້ານອັກຄີໄພ, ພາຫະນະ, ອຸປະກອນເຕັກນິກ, ວັດຖຸປະກອນ, ແຫຼ່ງນ້ຳ ແລະ ເງື່ອນໄຂອື່ນ ໃຫ້ຄົບຖ້ວນ;

3. ປະຕິບັດຕາມແຜນຕ້ານອັກຄີໄພ ທີ່ໄດ້ກຳນົດໄວ້;

4. ຈັດໜ່ວຍແພດ ອອກປະຕິບັດໜ້າທີ່ ເພື່ອຊ່ວຍເຫຼືອຜູ້ໄດ້ຮັບບາດເຈັບ;

5. ນຳໃຊ້ງົບປະມານຮັບໃຊ້ການຕ້ານອັກຄີໄພ;

6. ປະສານງານຢ່າງເລັ່ງດ່ວນ ກັບພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ ຂະແໜງໄຟຟ້າ, ຂະແໜງນໍ້າປະປາ ເພື່ອຕ້ານອັກຄີໄພ ຢ່າງທັນການ.

**ມາດຕາ 34 (ປັບປຸງ) ການນໍາໃຊ້ແຫຼ່ງນໍ້າ, ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນເຂົ້າໃນການຕ້ານອັກຄີໄພ**

ນອກຈາກໄດ້ກໍານົດໄວ້ໃນແຜນຕ້ານອັກຄີໄພແລ້ວ ຍັງສາມາດນໍາໃຊ້ແຫຼ່ງນໍ້າ, ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ທີ່ຢູ່ບ່ອນໃກ້ຄຽງ ເປັນບຸລິມະສິດ ເຂົ້າໃນການຕ້ານອັກຄີໄພ.

**ມາດຕາ 35 (ປັບປຸງ) ການແຈ້ງເຫດອັກຄີໄພ**

ການແຈ້ງເຫດອັກຄີໄພ ສາມາດ ແຈ້ງເຊິ່ງໜ້າ ຫຼື ແຈ້ງດ້ວຍເຄື່ອງສັນຍານ ແລະ ໂທລະສັບ.

ການແຈ້ງເຊິ່ງໜ້າ ໃຫ້ມາແຈ້ງ ຕໍ່ເຈົ້າໜ້າທີ່ ຢູ່ສູນບັນຊາສະກັດກັ້ນ ແລະ ຕ້ານອັກຄີໄພ ບ່ອນໃກ້ກັບສະຖານທີ່ເກີດອັກຄີໄພ ຢ່າງທັນການ. ສໍາລັບການແຈ້ງດ້ວຍເຄື່ອງສັນຍານ ແລະ ໂທລະສັບນັ້ນ ໃຫ້ແຈ້ງເຂົ້າສູນບັນຊາສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງແຂວງ ຫຼື ເມືອງ ບ່ອນໃກ້ກັບສະຖານທີ່ເກີດອັກຄີໄພໂດຍຜ່ານໝາຍເລກ 190 ຫຼື ແຈ້ງດ້ວຍເຄື່ອງສັນຍານ ໃຫ້ວ່ອງໄວ ແລະ ທັນການ.

ການກໍານົດໝາຍເລກ 190 ຫຼື ແຈ້ງດ້ວຍເຄື່ອງສັນຍານ ໃຫ້ກໍານົດເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

**ມາດຕາ 36 (ປັບປຸງ) ຄວາມຮັບຜິດຊອບຂອງບຸກຄົນ ແລະ ການຈັດຕັ້ງໃນການຕ້ານອັກຄີໄພ**

ໃນການຕ້ານອັກຄີໄພ ບຸກຄົນ ແລະ ການຈັດຕັ້ງ ມີຄວາມຮັບຜິດຊອບ ດັ່ງນີ້:

1. ບຸກຄົນທີ່ໄດ້ພົບເຫັນເຫດໄຟໄໝ້ ຫຼື ໄດ້ຍິນສັນຍານເຕືອນໄຟໄໝ້ ຕ້ອງແຈ້ງເຫດໄຟໄໝ້ໃຫ້ບໍລິເວນອ້ອມຂ້າງທີ່ໃກ້ສຸດ ແລະ ແຈ້ງໃຫ້ກໍາລັງສະກັດກັ້ນ ແລະ ຕ້ານອັກຄີໄພ ພ້ອມທັງເຂົ້າຮ່ວມຕ້ານອັກຄີໄພ ຢ່າງທັນການ;

2. ກໍາລັງສະກັດກັ້ນ ແລະ ຕ້ານອັກຄີໄພ ເມື່ອໄດ້ຮັບແຈ້ງເຫດໄຟໄໝ້ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຫຼື ຕາມການມອບໝາຍແລ້ວ ຕ້ອງຮີບຮ້ອນອອກປະຕິບັດໜ້າທີ່ ຢ່າງທັນການ;

3. ຂະແໜງການທີ່ກ່ຽວຂ້ອງ ເຊັ່ນ ຂະແໜງການ ສາທາລະນະສຸກ, ໂຍທາທິການ ແລະ ຂົນສົ່ງ, ພະລັງງານ ແລະ ບໍ່ແຮ່ ແລະ ຄະນະກໍາມະການຄຸ້ມຄອງໄພພິບັດ, ອົງການກາແດງ ຕ້ອງລະດົມ ກໍາລັງ, ພາຫະນະ, ອຸປະກອນເຕັກນິກ, ວັດຖຸປະກອນ, ທຶນ ອອກຊ່ວຍເຫຼືອຕ້ານອັກຄີໄພ ຢ່າງທັນເວລາ;

4. ກໍາລັງປ້ອງກັນຊາດ, ກໍາລັງປ້ອງກັນຄວາມສະຫງົບ, ກໍາລັງປ້ອງກັນຄວາມສະຫງົບບ້ານ, ກອງຫຼອນ ຕ້ອງຮັກສາຄວາມເປັນລະບຽບຮຽບຮ້ອຍ, ປ້ອງກັນສະຖານທີ່ໄຟໄໝ້ ແລະ ວັດຖຸສິ່ງຂອງ ພ້ອມທັງເຂົ້າຮ່ວມໃນການຕ້ານອັກຄີໄພ.

**ມາດຕາ 37 (ປັບປຸງ) ການປະກອບສ່ວນເຂົ້າໃນການຕ້ານອັກຄີໄພ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງປະກອບສ່ວນທາງດ້ານ ເຫື່ອແຮງ, ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ເຂົ້າໃນການຕ້ານອັກຄີໄພ ຕາມເງື່ອນໄຂຕົວຈິງ.

ໃນການເຂົ້າຮ່ວມການຕ້ານອັກຄີໄພນັ້ນ ຖ້າຫາກມີ ຜູ້ບາດເຈັບ, ຜູ້ເສຍຊີວິດ, ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ເປ່ເພ ເສຍຫາຍ ຈະໄດ້ຮັບການປະຕິບັດນະໂຍບາຍ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 38 (ປັບປຸງ) ການນຳໃຊ້ສິດໃນກໍລະນີເຫດການສຸກເສີນ**

ການນຳໃຊ້ສິດໃນກໍລະນີເຫດການສຸກເສີນ ໃຫ້ປະຕິບັດ ດັ່ງນີ້:

1. ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ມີສິດນຳ ກຳລັງ, ພາຫະນະ ອອກປະຕິບັດໜ້າທີ່ຕ້ານອັກຄີໄພຜ່ານທຸກເສັ້ນທາງ, ຜ່ານໄຟອຳນາດ, ໃຊ້ແກ, ໃຊ້ໄຟຕາ, ໄຟຂໍທາງ, ໄຟສຸກເສີນ, ໂທລະໂຄ່ງ, ເປີດຫວໍ, ສັນຍານອື່ນ, ຜ່ານຂົວ, ຜ່ານທາງ, ຂ້າມບັກ ໂດຍບໍ່ໃຫ້ເສຍຄ່າ;

2. ລົດມອດໄຟ ມີສິດໄປກ່ອນລົດຄັນອື່ນ ໃນເວລາປະຕິບັດໜ້າທີ່ຕ້ານອັກຄີໄພ;

3. ເຈົ້າຂອງປໍ້ານໍ້າມັນ ຕ້ອງໃຫ້ການຮ່ວມມືກັບກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ໃນການສະໜອງນໍ້າມັນໃຫ້ແກ່ລົດມອດໄຟ ທຸກເວລາ ໃນເວລາເກີດອັກຄີໄພ;

4. ຜູ້ປະກອບສ່ວນເຮັດໜ້າທີ່ຕ້ານອັກຄີໄພ ສາມາດນຳໃຊ້ພາຫະນະຕ່າງໆ ທີ່ແລ່ນຕາມເສັ້ນທາງໄປຫາບ່ອນອັກຄີໄພເກີດຂຶ້ນ ໂດຍບໍ່ເສຍຄ່າ;

5. ກຳລັງ, ພາຫະນະຕ່າງໆ ທີ່ປະກອບສ່ວນເຮັດໜ້າທີ່ຕ້ານອັກຄີໄພ ມີສິດ ໃຊ້ແກ, ເປີດໄຟຕາ, ໄຟຂໍທາງ, ໄຟສຸກເສີນ ແລະ ສັນຍານອື່ນ;

6. ກຳລັງຕຳຫຼວດຈະລາຈອນ ແລະ ກຳລັງປ້ອງກັນອື່ນ ຕ້ອງອຳນວຍຄວາມສະດວກ ໃຫ້ແກ່ກຳລັງ ແລະ ພາຫະນະ ຕ້ານອັກຄີໄພ;

7. ຜູ້ສັນຈອນຕາມທ້ອງຖະໜົນ ຕ້ອງຫຼີກທາງໃຫ້ກຳລັງ ແລະ ພາຫະນະ ຕ້ານອັກຄີໄພ.

**ມາດຕາ 39 (ປັບປຸງ) ການຕ້ານອັກຄີໄພ ໃນສຳນັກງານຜູ້ຕາງໜ້າການທູດ, ສຳນັກງານຜູ້ຕາງໜ້າກົງສູນ ແລະ ອົງການຈັດຕັ້ງສາກົນ**

ໃນກໍລະນີມີອັກຄີໄພເກີດຂຶ້ນ ໃນສຳນັກງານຜູ້ຕາງໜ້າການທູດ, ສຳນັກງານຜູ້ຕາງໜ້າກົງສູນ ແລະ ອົງການຈັດຕັ້ງສາກົນ ຢູ່ ສປປ ລາວ, ເຮືອນພັກຂອງຄົນຕ່າງປະເທດ ທີ່ມີອະພິສິດທາງການທູດນັ້ນ ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ມີໜ້າທີ່ເຂົ້າຊ່ວຍເຫຼືອ ຕາມການຮ້ອງຂໍຂອງພາກສ່ວນດັ່ງກ່າວ ແລະ ປະຕິບັດ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

**ມາດຕາ 40 (ປັບປຸງ) ຜູ້ບັນຊາຕ້ານອັກຄີໄພ**

ຜູ້ບັນຊາຕ້ານອັກຄີໄພ ແມ່ນ ຜູ້ໄດ້ຮັບການແຕ່ງຕັ້ງ ຫຼື ມອບໝາຍ ຫຼື ຜູ້ມີຕຳແໜ່ງ ຫຼື ຊັ້ນສູງກວ່າໝູ່ຂອງກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ທີ່ປະຕິບັດໜ້າທີ່ຢູ່ສະຖານທີ່ອັກຄີໄພເກີດຂຶ້ນ.

ໃນກໍລະນີກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ບໍ່ທັນໄປເຖິງສະຖານທີ່ໄຟໄໝ້ ໃຫ້ປະຕິບັດ ດັ່ງນີ້:

1. ຫົວໜ້າ ຫຼື ຮອງຫົວໜ້າ ສຳນັກງານ, ອົງການ ເປັນຜູ້ບັນຊາຕ້ານອັກຄີໄພ. ໃນກໍລະນີບຸກຄົນດັ່ງກ່າວບໍ່ຢູ່ ໃຫ້ຫົວໜ້າ ຫຼື ຮອງຫົວໜ້າປ້ອງກັນ ສຳນັກງານ, ອົງການ ຫຼື ຜູ້ໄດ້ຮັບມອບໝາຍ ເປັນຜູ້ບັນຊາຕ້ານອັກຄີໄພ;

2. ປະທານຄະນະກຳມະການປົກຄອງຂັ້ນເມືອງ, ນາຍບ້ານ ເປັນຜູ້ບັນຊາຕ້ານອັກຄີໄພ. ໃນກໍລະນີບຸກຄົນດັ່ງກ່າວບໍ່ຢູ່ ໃຫ້ຮອງປະທານຄະນະກຳມະການປົກຄອງຂັ້ນເມືອງ, ຮອງນາຍບ້ານ ຫຼື ຫົວໜ້າກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຫຼື ຜູ້ໄດ້ຮັບມອບໝາຍ ເປັນຜູ້ບັນຊາຕ້ານອັກຄີໄພ;

3. ເຈົ້າຂອງ ຫຼື ຜູ້ຂັບຂີ່ ພາຫະນະຂົນສົ່ງ ເປັນຜູ້ບັນຊາຕ້ານອັກຄີໄພ ເມື່ອພາຫະນະຂອງຕົນເກີດໄຟໄໝ້;

4. ຫົວໜ້າ ຫຼື ຮອງຫົວໜ້າ ຂະແໜງປ່າໄມ້ ຫຼື ຜູ້ໄດ້ຮັບມອບໝາຍ ຫຼື ເຈົ້າຂອງປ່າໄມ້ ຫຼື ນາຍບ້ານ ເປັນຜູ້ບັນຊາຕ້ານອັກຄີໄພ ເມື່ອເກີດໄຟໄໝ້ປ່າ.

**ມາດຕາ 41 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຜູ້ບັນຊາຕ້ານອັກຄີໄພ**

ຜູ້ບັນຊາຕ້ານອັກຄີໄພ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນໍາພາ, ບັນຊາກໍາລັງ, ນໍາໃຊ້ພາຫະນະ, ອຸປະກອນເຕັກນິກ, ວັດຖຸປະກອນ ແລະ ອອກປະຕິບັດໜ້າທີ່ຕ້ານອັກຄີໄພໃຫ້ທັນເວລາ;

2. ກໍານົດຂອບເຂດຕ້ານອັກຄີໄພ, ວິທີການຕ້ານອັກຄີໄພ, ນໍາໃຊ້ພື້ນທີ່ ຫຼື ສະຖານທີ່ໃກ້ຄຽງເພື່ອຕ້ານອັກຄີໄພ;

3. ບໍ່ອະນຸຍາດໃຫ້ບຸກຄົນ ຫຼື ພາຫະນະ ທີ່ບໍ່ກ່ຽວຂ້ອງໃນການຕ້ານອັກຄີໄພ ຜ່ານໄປມາໃນຂອບເຂດຕ້ານອັກຄີໄພ;

4. ລະດົມກໍາລັງ, ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ຈາກສໍານັກງານ, ອົງການ, ຄອບຄົວ ແລະ ບຸກຄົນ ເຂົ້າຮ່ວມຕ້ານອັກຄີໄພ.

ໃນກໍລະນີຈໍາເປັນ ຜູ້ບັນຊາຕ້ານອັກຄີໄພ ຍັງມີສິດຕັດສິນໃນການທັບມ້າງ ຫຼື ຍົກຍ້າຍສິ່ງກີດຂວາງເພື່ອກອບກູ້ເອົາ ຊີວິດ, ຊັບສິນ ຂອງພົນລະເມືອງ ແລະ ສະກັດກັ້ນບໍ່ໃຫ້ໄຟໄໝ້ລາມ.

**ມາດຕາ 42 (ປັບປຸງ) ການແກ້ໄຂໃນກໍລະນີເກີດອັກຄີໄພຮ້າຍແຮງ**

ໃນກໍລະນີ ເກີດອັກຄີໄພຮ້າຍແຮງ ແລະ ເກີນຄວາມສາມາດຂອງຕົນແລ້ວ ຜູ້ບັນຊາຕ້ານອັກຄີໄພຕ້ອງລາຍງານໃຫ້ຂັ້ນເທິງຂອງຕົນ ເພື່ອປະສານສົມທົບກັບຂະແໜງການ, ຄະນະກໍາມະການຄຸ້ມຄອງໄພພິບັດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ແລ້ວພ້ອມກັນແກ້ໄຂບັນຫາອັກຄີໄພທີ່ເກີດຂຶ້ນ.

ໃນກໍລະນີບໍ່ສາມາດແກ້ໄຂໄດ້ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ຕ້ອງລາຍງານໃຫ້ນາຍົກລັດຖະມົນຕີ ເປັນຜູ້ຕົກລົງແກ້ໄຂ.

**ມາດຕາ 43 (ປັບປຸງ) ການປ້ອງກັນ ແລະ ຊັນນະສູດ ສະຖານທີ່ເກີດອັກຄີໄພ**

ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ມີໜ້າທີ່ຮັບຜິດຊອບຈັດຕັ້ງປ້ອງກັນສະຖານທີ່ເກີດອັກຄີໄພ.

ກໍາລັງຕໍາຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ມີໜ້າທີ່ປະສານສົມທົບ ກັບພາກສ່ວນອື່ນທີ່ກ່ຽວຂ້ອງເຂົ້າຮ່ວມຊັນນະສູດສະຖານທີ່ເກີດອັກຄີໄພ, ຊອກຫາສາເຫດ, ຜົນເສຍຫາຍຈາກອັກຄີໄພ ແລ້ວດໍາເນີນການສືບສວນ-ສອບສວນ ແລະ ສະຫຼຸບສໍານວນຄະດີ ສົ່ງໃຫ້ອົງການໄອຍະການປະຊາຊົນ ຕາມກົດໝາຍໃນກໍລະນີພົບເຫັນຜູ້ກະທໍາຜິດ.

**ມາດຕາ 44 (ປັບປຸງ) ການແກ້ໄຂຜົນເສຍຫາຍຈາກອັກຄີໄພ**

ການແກ້ໄຂຜົນເສຍຫາຍຈາກອັກຄີໄພ ໃຫ້ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ບ່ອນເກີດໄຟໄໝ້ ປະຕິບັດ ດັ່ງນີ້:

1. ຈັດຕັ້ງຊ່ວຍເຫຼືອ, ບັນເທົາທຸກ ຜູ້ຖືກເຄາະຮ້າຍ, ຜູ້ຖືກເສຍຫາຍ ຈາກອັກຄີໄພ;

2. ຟື້ນຟູ ບູລະນະ, ທໍາຄວາມສະອາດສະຖານທີ່ ບ່ອນເກີດໄຟໄໝ້ ໃຫ້ເປັນລະບຽບຮຽບຮ້ອຍ;

3. ຟື້ນຟູ ການຜະລິດ, ການເຄື່ອນໄຫວທາງດ້ານເສດຖະກິດ, ການບໍລິຫານ ແລະ ການເຄື່ອນໄຫວອື່ນ ໃຫ້ຄືນສູ່ສະພາບປົກກະຕິເທື່ອລະກ້າວ;

4. ຊົດເຊີຍຜົນເສຍຫາຍ ຈາກການທັບມ້າງ, ຍົກຍ້າຍສິ່ງກີດຂວາງ, ການໃຊ້ນໍ້າມັນເຊື້ອໄຟ ແລະ ຜົນເສຍຫາຍອື່ນ ທີ່ເກີດຂຶ້ນໃນເວລາຕ້ານອັກຄີໄພ.

## ໝວດທີ 3
## ມາດຕະຖານເຕັກນິກ, ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ

**ມາດຕາ 45 (ປັບປຸງ) ມາດຕະຖານເຕັກນິກ ສະກັດກັ້ນ ແລະ ຕ້ານອັກຄີໄພ**

ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການໃນການ ຄົ້ນຄວ້າ, ກຳນົດ ມາດຕະຖານເຕັກນິກ ສະກັດກັ້ນ ແລະ ຕ້ານອັກຄີໄພ ໂດຍປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ແລ້ວສະເໜີຕໍ່ລັດຖະບານພິຈາລະນາ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງປະຕິບັດຕາມມາດຕະຖານເຕັກນິກ ສະກັດກັ້ນ ແລະ ຕ້ານອັກຄີໄພ ທີ່ໄດ້ກຳນົດໄວ້.

ການນຳໃຊ້ມາດຕະຖານເຕັກນິກ ສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງຕ່າງປະເທດ ຢູ່ ສປປ ລາວ ຕ້ອງຂໍອະນຸຍາດ ນຳກະຊວງປ້ອງກັນຄວາມສະຫງົບ.

**ມາດຕາ 46 (ປັບປຸງ) ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ**

ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ແມ່ນສິ່ງຈຳເປັນ ແລະ ເປັນປະໂຫຍດໃຫ້ແກ່ການຮັບໃຊ້ວຽກງານ ສະກັດກັ້ນ ແລະ ຕ້ານອັກຄີໄພ ເຊັ່ນ ລົດມອດໄຟ, ລົດບັນທຸກນ້ຳມອດໄຟ, ລົດຍົກມອດໄຟ, ລົດກູ້ໄພ, ເຮືອບິນມອດໄຟ, ເຮືອບິນບໍ່ມີຄົນຂັບມອດໄຟ, ເຮືອມອດໄຟ, ເຮືອກູ້ໄພ, ອຸປະກອນເຕືອນໄຟສຸກເສີນ, ອຸປະກອນປ້ອງກັນອັກຄີໄພ, ບັ້ງມອດໄຟ, ອ່າງນ້ຳ, ລະບົບກ໊ອກນ້ຳມອດໄຟ, ຂັ້ນໄດ ແລະ ລົດພະຍາບານ.

**ມາດຕາ 47 (ປັບປຸງ) ການປະກອບພາຫະນະ, ອຸປະກອນເຕັກນິກ, ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ໃນສຳນັກງານ, ອົງການ, ສະຖານທີ່ດຳເນີນກິດຈະການ, ອົງການປົກຄອງບ້ານ ແລະ ຄອບຄົວ**

ການປະກອບພາຫະນະ, ອຸປະກອນເຕັກນິກ, ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ໃນສຳນັກງານ, ອົງການ, ສະຖານທີ່ດຳເນີນກິດຈະການ, ອົງການປົກຄອງບ້ານ ແລະ ຄອບຄົວ ໃຫ້ປະຕິບັດດັ່ງນີ້:

1. ສຳນັກງານ, ອົງການ ຕ້ອງໄດ້ຕິດຕັ້ງ ອຸປະກອນເຕັກນິກ ແລະ ວັດຖຸປະກອນ, ປະກອບພາຫະນະ ທີ່ຈຳເປັນຮັບໃຊ້ວຽກງານ ສະກັດກັ້ນ ແລະ ຕ້ານອັກຄີໄພ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ສະຖານທີ່ດຳເນີນກິດຈະການ ຫຼື ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ທຳການດຳເນີນທຸລະກິດ, ການຜະລິດ, ເຈົ້າຂອງພາຫະນະຂົນສົ່ງ ຕ້ອງປະກອບ ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ;
3. ອົງການປົກຄອງບ້ານ ຕ້ອງປະກອບ ອຸປະກອນເຕັກນິກ ແລະ ວັດຖຸປະກອນ ທີ່ຈຳເປັນໃຫ້ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພຂອງບ້ານ ຕາມເງື່ອນໄຂຕົວຈິງ;
4. ຄອບຄົວ ຕ້ອງກະກຽມ ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ເປັນຕົ້ນ ຖັງບັນຈຸນ້ຳ ແລະ ບັ້ງມອດໄຟ ຕາມເງື່ອນໄຂຕົວຈິງ;

ສຳລັບ ມາດຕະຖານການປະກອບ ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງສຳນັກງານ, ອົງການ, ສະຖານທີ່ດຳເນີນກິດຈະການ, ອົງການປົກຄອງບ້ານ ແລະ ຄອບຄົວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 48 (ປັບປຸງ) ການປະກອບພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ໃຫ້ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ**

ລັດ ເປັນຜູ້ສະໜອງງົບປະມານ, ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ໃຫ້ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ຢ່າງພຽງພໍ, ຄົບຊຸດ ແລະ ທັນສະໄໝ.

ລັດ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນຊ່ວຍເຫຼືອທາງດ້ານ ທຶນ, ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ໃຫ້ແກ່ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ຕາມຄວາມສາມາດຕົວຈິງ.

**ມາດຕາ 49 (ປັບປຸງ) ການຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ**

ການຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ຕ້ອງຮັບປະກັນຄຸນນະພາບ ເພື່ອກຽມພ້ອມຕ້ານອັກຄີໄພໃຫ້ທັນເວລາ.

ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ທີ່ນຳໃຊ້ເຂົ້າໃນວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພແລ້ວ ກໍຍັງນຳໃຊ້ເຂົ້າໃນວຽກງານ ຕ້ານໄພພິບັດ, ຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ຕ້ອງໄດ້ຮັບການກວດກາມາດຕະຖານເຕັກນິກ ຢ່າງເປັນປະຈຳ ເພື່ອໃຫ້ມີຄວາມພ້ອມ ໃນການປະຕິບັດໜ້າທີ່.

**ມາດຕາ 50 (ປັບປຸງ) ການຜະລິດ, ການນຳເຂົ້າພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ**

ການຜະລິດ, ການນຳເຂົ້າພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ຕ້ອງຮັບປະກັນຄຸນນະພາບ ໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ, ເໝາະສົມກັບເງື່ອນໄຂຂອງ ສປປ ລາວ ແລະ ໄດ້ຮັບອະນຸຍາດຈາກ ກະຊວງປ້ອງກັນຄວາມສະຫງົບ ໂດຍປະສານສົມທົບກັບກະຊວງອື່ນທີ່ກ່ຽວຂ້ອງ.

## ພາກທີ III
## ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ

**ມາດຕາ 51 (ປັບປຸງ) ປະເພດກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ**

ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ແມ່ນ ກຳລັງຫຼັກແຫຼ່ງ, ເປັນໃຈກາງເຄື່ອນໄຫວຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ໃນຂອບເຂດທົ່ວປະເທດ ຊຶ່ງປະກອບດ້ວຍ:

1. ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ;
2. ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງສຳນັກງານ, ອົງການ ແລະ ສະຖານທີ່ດຳເນີນກິດຈະການ;
3. ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງບ້ານ.

**ມາດຕາ 52 (ປັບປຸງ) ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ**

ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ແມ່ນ ກຳລັງອາຊີບ ທີ່ເຮັດໜ້າທີ່ສະກັດກັ້ນ ແລະ ຕ້ານອັກຄີໄພ ທີ່ຂຶ້ນກັບຂະແໜງການປ້ອງກັນຄວາມສະຫງົບ, ມີການຈັດຕັ້ງແຕ່ສູນກາງຮອດທ້ອງຖິ່ນ, ມີພາລະບົດ

ບາດເປັນເສນາທິການໃຫ້ຂະແໜງການປ້ອງກັນຄວາມສະຫງົບ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ໃນຂອບເຂດທົ່ວປະເທດ.

ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ກົດໝາຍ, ລະບຽບການ, ແຜນການ, ວິທີການ ແລະ ມາດຕະການ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ເພື່ອສະເໜີຂັ້ນເທິງ;

2. ໂຄສະນາ ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

3. ຄົ້ນຄວ້າ ແລະ ນຳໃຊ້ເຕັກໂນໂລຊີ ທີ່ທັນສະໄໝເຂົ້າໃນວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

4. ສ້າງແຜນການເຄື່ອນໄຫວສະກັດກັ້ນ ແລະ ຕ້ານອັກຄີໄພ;

5. ບຳລຸງ, ສ້າງ, ຝຶກອົບຮົມວຽກງານວິຊາສະເພາະ ແລະ ຝຶກຊ້ອມແຜນສະກັດກັ້ນ ແລະ ຕ້ານອັກຄີໄພ ຢ່າງເປັນປົກກະຕິ;

6. ຝຶກອົບຮົມ, ຝຶກຊ້ອມ ການສະກັດກັ້ນ ແລະ ຕ້ານອັກຄີໄພ ພ້ອມທັງອອກໃບຢັ້ງຢືນ ໃຫ້ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພຂອງພາກສ່ວນອື່ນ;

7. ຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ, ກວດກາເຕັກນິກ ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ຕາມມາດຕະຖານເຕັກນິກ;

8. ກວດຜ່ານ ແລະ ອອກໃບຢັ້ງຢືນ ກ່ຽວກັບ ການອອກແບບ ແລະ ການຕິດຕັ້ງ ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ;

9. ສຶກສາອົບຮົມ, ກ່າວເຕືອນ, ປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ;

10. ເຂົ້າຮ່ວມການຊັນນະສູດສະຖານທີ່ເກີດອັກຄີໄພ ແລະ ດຳເນີນຄະດີ ກ່ຽວກັບອັກຄີໄພຕາມກົດໝາຍ;

11. ກະກຽມ ງົບປະມານ, ກຳລັງ, ພາຫະນະ, ອຸປະກອນເຕັກນິກ, ວັດຖຸປະກອນ ແລະ ອອກປະຕິບັດໜ້າທີ່ຢ່າງທັນການ ເມື່ອມີອັກຄີໄພເກີດຂຶ້ນ;

12. ຈັດຕັ້ງກຳລັງປະຈຳການຕະຫຼອດ ຊາວສີ່ຊົ່ວໂມງ ເພື່ອກຽມພ້ອມອອກປະຕິບັດໜ້າທີ່ຕ້ານອັກຄີໄພຢ່າງທັນການ;

13. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງໃນການ ຄຸ້ມຄອງ, ກວດກາ, ອະນຸຍາດ ການຜະລິດ, ການນຳເຂົ້າພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ;

14. ກວດກາເຕັກນິກ, ແກ້ໄຂການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

15. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ປຸກລະດົມຂະບວນການມະຫາຊົນ ເຂົ້າຮ່ວມວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

16. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

17. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 53 (ປັບປຸງ) ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງສຳນັກງານ, ອົງການ ແລະ ສະຖານທີ່ດຳເນີນກິດຈະການ**

ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງສຳນັກງານ, ອົງການ ແລະ ສະຖານທີ່ດຳເນີນກິດຈະການ ແມ່ນ ກຳລັງອາຊີບ ຫຼື ເຄິ່ງອາຊີບ ທີ່ໄດ້ຮັບການສ້າງຕັ້ງຂຶ້ນໂດຍສຳນັກງານ, ອົງການ ແລະ ສະຖານທີ່ດຳເນີນກິດຈະການ ແລະ ຢູ່ພາຍໃຕ້ການຊີ້ນຳທາງດ້ານວິຊາສະເພາະ ຂອງກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ.

ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງສຳນັກງານ, ອົງການ ແລະ ສະຖານທີ່ດຳເນີນກິດຈະການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
2. ຄົ້ນຄວ້າ ວາງລະບຽບການສະກັດກັ້ນ ແລະ ຕ້ານອັກຄີໄພ;
3. ສ້າງແຜນສະກັດກັ້ນ ແລະ ຕ້ານອັກຄີໄພ;
4. ກວດກາການນຳໃຊ້ມາດຕະຖານເຕັກນິກ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
5. ຈັດຕັ້ງຝຶກຊ້ອມກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຢ່າງເປັນປົກກະຕິ;
6. ກະກຽມ ງົບປະມານ, ກຳລັງ, ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ເພື່ອປະຕິບັດໜ້າທີ່ ຕ້ານອັກຄີໄພ;
7. ປຸກລະດົມພະນັກງານ ແລະ ປະຊາຊົນ ເຂົ້າຮ່ວມຕ້ານອັກຄີໄພ;
8. ປະສານສົມທົບ ກັບ ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ, ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພຂອງບ້ານໃນການປະຕິບັດໜ້າທີ່;
9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຕໍ່ຫົວໜ້າສຳນັກງານ, ອົງການ, ເຈົ້າຂອງສະຖານທີ່ດຳເນີນກິດຈະການ, ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ຢ່າງເປັນປົກກະຕິ;
10. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 54 (ໃໝ່) ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງບ້ານ**

ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງບ້ານ ແມ່ນ ກຳລັງອາສາສະໝັກ ຂອງປະຊາຊົນ ທີ່ໄດ້ຮັບການສ້າງຕັ້ງຂຶ້ນໂດຍອົງການປົກຄອງບ້ານ ແລະ ຢູ່ພາຍໃຕ້ການຊີ້ນຳ ທາງດ້ານວິຊາສະເພາະ ຂອງກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ.

ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
2. ສຶກສາອົບຮົມ ປະຊາຊົນ ໃຫ້ຮັບຮູ້, ເຂົ້າໃຈ, ເຂົ້າຮ່ວມ, ໃຫ້ການຮ່ວມມື ແລະ ປະກອບສ່ວນເຂົ້າໃນວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
3. ຄົ້ນຄວ້າ ວາງລະບຽບການສະກັດກັ້ນ ແລະ ຕ້ານອັກຄີໄພ;
4. ກະກຽມ ອຸປະກອນເຕັກນິກ, ວັດຖຸປະກອນ ແລະ ແຫຼ່ງນ້ຳ ເພື່ອຮັບປະກັນການຕ້ານອັກຄີໄພ;
5. ປະສານສົມທົບກັບ ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການປະຕິບັດໜ້າທີ່;
6. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຕໍ່ກຳລັງຕຳຫຼວດ ສະກັດກັ້ນ ແລະ ຕ້ານອັກຄີໄພ ຢ່າງເປັນປົກກະຕິ;
7. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

# ພາກທີ IV
# ທຸລະກິດ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ

**ມາດຕາ 55 (ໃໝ່) ການດຳເນີນທຸລະກິດກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ດຳເນີນທຸລະກິດ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດນຳຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂໍອະນຸຍາດດຳເນີນທຸລະກິດ ນຳຂະແໜງການປ້ອງກັນຄວາມສະຫງົບ ຕາມກົດໝາຍ.

**ມາດຕາ 56 (ໃໝ່) ປະເພດທຸລະກິດກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ**

ປະເພດທຸລະກິດ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ ມີ ດັ່ງນີ້:

1. ທີ່ປຶກສາ ແລະ ສຳຫຼວດອອກແບບ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ;
2. ຕິດຕັ້ງ, ທົດລອງ, ສ້ອມແປງ, ບຳລຸງຮັກສາ ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ;
3. ຜະລິດ, ປະກອບ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ;
4. ທຸລະກິດອື່ນ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ.

**ມາດຕາ 57 (ໃໝ່) ເງື່ອນໄຂການດຳເນີນທຸລະກິດກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ**

ການດຳເນີນທຸລະກິດ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ ມີເງື່ອນໄຂ ດັ່ງນີ້:

1. ມີໃບທະບຽນວິສາຫະກິດ;
2. ມີສະຖານທີ່, ສຳນັກງານ, ທຶນ, ອຸປະກອນ, ເຄື່ອງມື ແລະ ພາຫະນະຮັບໃຊ້ຢ່າງເໝາະສົມ;
3. ມີບົດວິພາກເສດຖະກິດ-ເຕັກນິກ ຫຼື ແຜນດຳເນີນທຸລະກິດ;
4. ມີນັກວິຊາການທີ່ມີຄວາມຮູ້ ແລະ ປະສົບການ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ ຢ່າງໜ້ອຍ ຫ້າປີ ຂຶ້ນໄປ;
5. ມີການປະກັນໄພອັກຄີໄພ;
6. ມີເງື່ອນໄຂອື່ນ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ.

**ມາດຕາ 58 (ໃໝ່) ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ**

ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ ມີ ດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ ຕາມແບບພິມ ທີ່ກະຊວງປ້ອງກັນຄວາມສະຫງົບ ກຳນົດ;
2. ສຳເນົາໃບທະບຽນວິສາຫະກິດ;
3. ບົດວິພາກເສດຖະກິດ-ເຕັກນິກ ຫຼື ແຜນດຳເນີນທຸລະກິດ;
4. ເອກະສານອື່ນ ຕາມແຕ່ລະປະເພດທຸລະກິດ.

**ມາດຕາ 59 (ໃໝ່) ການພິຈາລະນາການຂໍອະນຸຍາດດຳເນີນທຸລະກິດ**

ຂະແໜງການປ້ອງກັນຄວາມສະຫງົບ ຕ້ອງພິຈາລະນາການຂໍອະນຸຍາດດຳເນີນທຸລະກິດ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍ ແລະ ເອກະສານປະກອບຢ່າງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.

ໃນກໍລະນີບໍ່ອະນຸຍາດ ໃຫ້ດຳເນີນທຸລະກິດນັ້ນ ກໍໃຫ້ແຈ້ງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນໃຫ້ຜູ້ຮ້ອງຂໍ ພາຍໃນກຳນົດເວລາ ດັ່ງກ່າວ.

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ ມີອາຍຸການ ຕາມແຕ່ລະປະເພດທຸລະກິດ ແລະ ສາມາດຕໍ່ໄດ້ ຕາມລະບຽບການ.

**ມາດຕາ 60 (ໃໝ່) ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ ມີ ສິດ ແລະ ພັນທະ ດັ່ງນີ້:

1. ດຳເນີນທຸລະກິດ ໃຫ້ຖືກຕ້ອງຕາມການອະນຸຍາດ, ມາດຕະຖານເຕັກນິກ ແລະ ກົດໝາຍ;
2. ໄດ້ຮັບ ຂໍ້ມູນ ຂ່າວສານ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ;
3. ຮ້ອງທຸກກ່ຽວກັບການລະເມີດສິດຂອງຕົນ ໃນການດຳເນີນທຸລະກິດ;
4. ປະກອບສ່ວນ ທາງດ້ານທຶນ ຫຼື ແຮງງານ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ເຂົ້າໃນວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
5. ໃຫ້ການຮ່ວມມື, ສະໜອງ ຂໍ້ມູນ ຂ່າວສານ ແລະ ອຳນວຍຄວາມສະດວກໃຫ້ແກ່ຂະແໜງການປ້ອງກັນຄວາມສະຫງົບ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ;
6. ຮຽກເກັບຄືນ ອຸປະກອນເຕັກນິກ, ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ທີ່ບໍ່ໄດ້ມາດຕະຖານ ເພື່ອປັບປຸງ ຫຼື ແກ້ໄຂ;
7. ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນຈາກການດຳເນີນທຸລະກິດຂອງຕົນ;
8. ເສຍອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ຕາມກົດໝາຍ ແລະ ລະບຽບການ;
9. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 61 (ໃໝ່) ການໂຈະ ການດຳເນີນທຸລະກິດ**

ການດຳເນີນທຸລະກິດ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ ຈະຖືກໂຈະໃນກໍລະນີ ດັ່ງນີ້:

1. ມີການສະເໜີຂອງຜູ້ດຳເນີນທຸລະກິດ;
2. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;
3. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ.

ໃນກໍລະນີຜູ້ດຳເນີນທຸລະກິດ ບໍ່ປັບປຸງ ຫຼື ບໍ່ແກ້ໄຂ ຕາມການແຈ້ງເຕືອນແລ້ວ ໃຫ້ຂະແໜງການປ້ອງກັນຄວາມສະຫງົບ ສັ່ງໂຈະການດຳເນີນທຸລະກິດ.

**ມາດຕາ 62 (ໃໝ່) ການຖອນໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ ຈະຖືກຖອນໃນກໍລະນີ ດັ່ງນີ້:

1. ມີການສະເໜີ ຂໍຖອນຂອງຜູ້ດຳເນີນທຸລະກິດ ໂດຍມີເຫດຜົນພຽງພໍ;
2. ບໍ່ປັບປຸງ ຫຼື ບໍ່ແກ້ໄຂຕາມຄຳສັ່ງໂຈະ;
3. ລະເມີດ ກົດໝາຍ, ລະບຽບການ, ມາດຕະຖານເຕັກນິກ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ ແລະ ສ້າງຜົນເສຍຫາຍຢ່າງຫຼວງຫຼາຍ ຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;
4. ມີການຕັດສິນຂອງສານ ໃຫ້ລົ້ມລະລາຍ;
5. ບໍ່ດຳເນີນທຸລະກິດພາຍຫຼັງໄດ້ຮັບອະນຸຍາດແລ້ວ ເປັນເວລາ ໜຶ່ງປີ.

ພາຍຫຼັງໄດ້ຖອນໃບອະນຸຍາດດຳເນີນທຸລະກິດແລ້ວ ຂະແໜງການປ້ອງກັນຄວາມສະຫງົບ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ທີ່ກ່ຽວຂ້ອງພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນຖອນໃບອະນຸຍາດດຳເນີນທຸລະກິດ ເປັນຕົ້ນໄປ.

## ພາກທີ V
## ກອງທຶນສະກັດກັ້ນ ແລະ ຕ້ານອັກຄີໄພ

**ມາດຕາ 63 (ປັບປຸງ) ການສ້າງຕັ້ງກອງທຶນ**

ກອງທຶນສະກັດກັ້ນ ແລະ ຕ້ານອັກຄີໄພ ແມ່ນ ກອງທຶນຂອງລັດ ທີ່ສ້າງຕັ້ງຂຶ້ນ ເພື່ອສະສົມ ແລະ ລະດົມທຶນຈາກແຫຼ່ງຕ່າງໆ ແນໃສ່ຮັບປະກັນໃຫ້ມີງົບປະມານພຽງພໍ ແລະ ຍືນຍົງ ເພື່ອນຳໃຊ້ເຂົ້າໃນການສະກັດກັ້ນ ແລະ ຕ້ານອັກຄີໄພ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ກອງທຶນສະກັດກັ້ນ ແລະ ຕ້ານອັກຄີໄພ ມີ ສອງ ຂັ້ນ ຄື ຂັ້ນສູນກາງ ແລະ ຂັ້ນແຂວງ.

ກອງທຶນສະກັດກັ້ນ ແລະ ຕ້ານອັກຄີໄພ ຂຽນເປັນຕົວອັກສອນຫຍໍ້ (ກສພ).

**ມາດຕາ 64 (ປັບປຸງ) ແຫຼ່ງກອງທຶນ**

ກອງທຶນສະກັດກັ້ນ ແລະ ຕ້ານອັກຄີໄພ ໄດ້ມາຈາກ:

1. ງົບປະມານຂອງລັດ;
2. ການປະກັນໄພ ອັກຄີໄພ ຕາມລະບຽບການ;
3. ການຊ່ວຍເຫຼືອ ແລະ ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
4. ສ່ວນແບ່ງຄ່າປັບໃໝ ຈາກການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ;
5. ດອກເບ້ຍເງິນຝາກ ຂອງກອງທຶນ;
6. ການເຄື່ອນໄຫວກິດຈະກຳ ແລະ ລາຍຮັບອື່ນທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 65 (ປັບປຸງ) ການຄຸ້ມຄອງ ແລະ ການນຳໃຊ້ ກອງທຶນ**

ການຄຸ້ມຄອງ ແລະ ການນຳໃຊ້ ກອງທຶນສະກັດກັ້ນ ແລະ ຕ້ານອັກຄີໄພ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ກອງທຶນສະກັດກັ້ນ ແລະ ຕ້ານອັກຄີໄພ ນຳໃຊ້ເຂົ້າໃນເປົ້າໝາຍ ການຈັດຊື້, ຈັດຈ້າງ, ການບຳລຸງຮັກສາ, ການສ້ອມແປງພາຫະນະ, ອຸປະກອນເຕັກນິກ, ວັດຖຸປະກອນ, ການພັດທະນາດ້ານບຸກຄະລາກອນ, ການຍົກລະດັບຄວາມຮູ້ຄວາມສາມາດ, ການຝຶກແອບ, ຝຶກຊ້ອມ, ຊົດເຊີຍຜົນເສຍຫາຍຕາມທີ່ໄດ້ກຳນົດໄວ້ໃນມາດຕາ 44 ຂໍ້ 4 ຂອງກົດໝາຍສະບັບນີ້, ການໂຄສະນາ ເຜີຍແຜ່ ກົດໝາຍ ແລະ ລະບຽບການ, ການປະຕິບັດນະໂຍບາຍອື່ນ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ.

ການຄຸ້ມຄອງ ແລະ ການນຳໃຊ້ ກອງທຶນສະກັດກັ້ນ ແລະ ຕ້ານອັກຄີໄພ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 66 (ປັບປຸງ) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ເຮັດໃຫ້ເກີດໄຟໄໝ້ ທີ່ສ້າງຜົນເສຍຫາຍຕໍ່ ສຸຂະພາບ, ຊີວິດ ແລະ ຊັບສິນຂອງ ລັດ, ລວມໝູ່, ພົນລະເມືອງ;
2. ຂັດຂວາງການປະຕິບັດໜ້າທີ່ ຂອງກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ;

3. ສວຍໂອກາດລັກຊັບສິນໃນເວລາເກີດອັກຄີໄພ;

4. ແຈ້ງເຫັດກ່ຽວກັບເຫດໄຟໄໝ້;

5. ກໍ່ສ້າງເຄຫະສະຖານ ໂດຍບໍ່ຖືກຕ້ອງຕາມມາດຕະຖານເຕັກນິກ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ ແລະ ບໍ່ໄດ້ຮັບການຢັ້ງຢືນຈາກ ກໍາລັງຕໍາຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ;

6. ບໍ່ປະຕິບັດຕາມມາດຕະຖານເຕັກນິກກ່ຽວກັບການຄຸ້ມຄອງ, ນໍາໃຊ້ແຫຼ່ງໄຟ, ແຫຼ່ງຄວາມຮ້ອນ;

7. ທໍາລາຍ, ປ່ຽນແປງ, ເຄື່ອນຍ້າຍ ປ້າຍຊີ້ບອກທາງສຸກເສີນ, ຜັງໜີໄຟ, ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ໂດຍບໍ່ໄດ້ຮັບອະນຸຍາດ;

8. ຈູດໄຮ່, ຈູດສວນ, ຈູດປ່າ ແລະ ຈູດສິ່ງອື່ນ ຢ່າງຊະຊາຍ;

9. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 67 (ໃໝ່) ຂໍ້ຫ້າມສໍາລັບຜູ້ດໍາເນີນທຸລະກິດ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ**

ຫ້າມ ຜູ້ດໍາເນີນທຸລະກິດ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ ມີພຶດຕິກໍາ ດັ່ງນີ້:

1. ດໍາເນີນທຸລະກິດ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ ໂດຍບໍ່ໄດ້ຮັບອະນຸຍາດ;

2. ຜະລິດ, ປຸງແຕ່ງ, ນໍາເຂົ້າ ແລະ ເກັບມ້ຽນ, ຄຸ້ມຄອງ ແລະ ນໍາໃຊ້ ວັດຖຸໄວໄຟ ທີ່ບໍ່ຖືກຕ້ອງຕາມມາດຕະຖານເຕັກນິກ;

3. ຜະລິດ, ນໍາເຂົ້າ, ສົ່ງອອກ ແລະ ຈໍາໜ່າຍ ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນສະກັດກັ້ນ ແລະ ຕ້ານອັກຄີໄພ ທີ່ບໍ່ໄດ້ມາດຕະຖານເຕັກນິກ;

4. ດໍາເນີນກິດຈະການທີ່ມີຄວາມສ່ຽງຕໍ່ການໄໝ້ລະເບີດ ໂດຍບໍ່ໄດ້ຮັບການຢັ້ງຢືນ ຈາກກໍາລັງຕໍາຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ;

5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 68 (ປັບປຸງ) ຂໍ້ຫ້າມສໍາລັບກໍາລັງສະກັດກັ້ນ ແລະ ຕ້ານອັກຄີໄພ**

ຫ້າມ ກໍາລັງສະກັດກັ້ນ ແລະ ຕ້ານອັກຄີໄພ ມີພຶດຕິກໍາ ດັ່ງນີ້:

1. ປະລະໜ້າທີ່ ຫຼື ບໍ່ປະຕິບັດຄໍາສັ່ງ ໃນເວລາປະຈໍາການ ຫຼື ເວລາປະຕິບັດໜ້າທີ່ ຕ້ານອັກຄີໄພ;

2. ສວຍໃຊ້ສິດ, ໜ້າທີ່, ຕໍາແໜ່ງ ອອກເຄື່ອນໄຫວກວດກາເຕັກນິກ, ຕິດຕັ້ງວັດຖຸປະກອນໂດຍບໍ່ຖືກຕ້ອງ ແລະ ບໍ່ໄດ້ຮັບອະນຸຍາດຈາກການຈັດຕັ້ງຂອງຕົນ;

3. ສວຍໂອກາດ, ປິດບັງ, ຍັກຍອກເອົາວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ;

4. ຮຽກຄ່າຕອບແທນ ໃນການປະຕິບັດໜ້າທີ່ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VII
## ການຄຸ້ມຄອງ ແລະ ການກວດກາ ວຽກງານ ສະກັດກັ້ນ ແລະ ຕ້ານອັກຄີໄພ
### ໝວດທີ 1
### ການຄຸ້ມຄອງວຽກງານ ສະກັດກັ້ນ ແລະ ຕ້ານອັກຄີໄພ

**ມາດຕາ 69 (ປັບປຸງ) ອົງການຄຸ້ມຄອງ**

ລັດຖະບານ ຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ຂະແໜງການປ້ອງກັນຄວາມສະຫງົບ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ຂະແໜງການ ປ້ອງກັນປະເທດ, ໂຍທາທິການ ແລະ ຂົນສົ່ງ, ພະລັງ

ງານ ແລະ ບໍ່ແຮ່, ອຸດສາຫະກຳ ແລະ ການຄ້າ, ກະສິກຳ ແລະ ປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ປະກອບດ້ວຍ:

1. ກະຊວງປ້ອງກັນຄວາມສະຫງົບ;
2. ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ;
3. ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ.

**ມາດຕາ 70 (ປັບປຸງ) ສິດ ແລະ ໜ້າທີ່ຂອງກະຊວງປ້ອງກັນຄວາມສະຫງົບ**

ໃນການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ເປັນລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

4. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ໃນຂອບເຂດທົ່ວປະເທດ;

5. ຂຶ້ນແຜນງົບປະມານຈັດຊື້ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ໃຫ້ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ;

6. ຄົ້ນຄວ້າ ກຳນົດມາດຕະຖານເຕັກນິກສະກັດກັ້ນ ແລະ ຕ້ານອັກຄີໄພ;

7. ອະນຸຍາດ ການນຳໃຊ້ມາດຕະຖານເຕັກນິກ ສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງຕ່າງປະເທດ ຢູ່ ສປປ ລາວ;

8. ຊີ້ນຳ ການອອກໃບຢັ້ງຢືນ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ;

9. ອອກ, ໂຈະ ແລະ ຖອນ ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ;

10. ສ້າງ, ບຳລຸງ, ຍົກລະດັບໃຫ້ ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ;

11. ປຸກລະດົມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ເຂົ້າຮ່ວມ, ໃຫ້ການຮ່ວມມື ແລະ ປະກອບສ່ວນ ເຂົ້າໃນວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

12. ສ້າງລະບົບຂໍ້ມູນ ຂ່າວສານ, ລະບົບສື່ສານ ເພື່ອຄຸ້ມຄອງ, ຊີ້ນຳ ບັນຊາ ການເຄື່ອນໄຫວ ວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

13. ຊີ້ນຳ ການດຳເນີນຄະດີ ກ່ຽວກັບ ອັກຄີໄພ ຕາມກົດໝາຍ;

14. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

15. ປະສານສົມທົບ ກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນ ອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

16. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

17. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

18. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 71 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ**

ໃນການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

3. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

4. ຂຶ້ນແຜນງົບປະມານຈັດຊື້ ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ໃຫ້ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ;

5. ຊີ້ນຳ ການອອກໃບຢັ້ງຢືນ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ;

6. ອອກ, ໂຈະ ແລະ ຖອນ ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ;

7. ສະເໜີ ສ້າງ, ບຳລຸງ, ຍົກລະດັບໃຫ້ ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ;

8. ປຸກລະດົມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ເຂົ້າຮ່ວມ, ໃຫ້ການຮ່ວມມື ແລະ ປະກອບສ່ວນ ເຂົ້າໃນວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

9. ສ້າງລະບົບຖານ ຂໍ້ມູນ ຂ່າວສານ, ລະບົບສື່ສານ ເພື່ອຄຸ້ມຄອງ, ຊີ້ນຳ ບັນຊາ ການເຄື່ອນໄຫວ ວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

10. ຊີ້ນຳ ການດຳເນີນຄະດີ ກ່ຽວກັບ ອັກຄີໄພ ຕາມກົດໝາຍ;

11. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

12. ປະສານສົມທົບ ກັບພະແນກການ, ອົງການລັດທຽບເທົ່າພະແນກຂັ້ນແຂວງ, ອົງການປົກຄອງຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

13. ພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຕາມການມອບໝາຍຂອງຂັ້ນເທິງ;

14. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດ ວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຕໍ່ກະຊວງປ້ອງກັນຄວາມສະຫງົບ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 72 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ**

ໃນການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

2. ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

3. ຄົ້ນຄວ້າ ສ້າງ ລະບຽບການ ແລະ ແຜນການ ສະກັດກັ້ນ ແລະ ຕ້ານອັກຄີໄພ;

4. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ການຈັດຕັ້ງປະຕິບັດ ວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

5. ຂຶ້ນແຜນງົບປະມານຈັດຊື້ ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ໃຫ້ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ;

6. ກວດຜ່ານ ເອກະສານການສະເໜີຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ;

7. ສະເໜີ ສ້າງ, ບຳລຸງ, ຍົກລະດັບໃຫ້ ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ;

8. ຊີ້ນຳ ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ໃນການແຕ່ງຕັ້ງກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງບ້ານ;

9. ປຸກລະດົມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ເຂົ້າຮ່ວມ, ໃຫ້ການຮ່ວມມື ແລະ ປະກອບສ່ວນ ເຂົ້າໃນວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

10. ຄຸ້ມຄອງ, ນຳໃຊ້ລະບົບຖານ ຂໍ້ມູນ ຂ່າວສານ, ລະບົບສື່ສານ ກ່ຽວກັບການເຄື່ອນໄຫວວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

11. ຊີ້ນຳ ການດຳເນີນຄະດີ ກ່ຽວກັບ ອັກຄີໄພ ຕາມກົດໝາຍ;

12. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

13. ປະສານສົມທົບກັບ ຫ້ອງການ, ອົງການລັດທຽບເທົ່າຫ້ອງການຂັ້ນເມືອງ, ອົງການປົກຄອງບ້ານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;

14. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຕໍ່ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 73 (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງການປ້ອງກັນປະເທດ**

ໃນການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຂະແໜງການປ້ອງກັນປະເທດ ມີ ສິດ ແລະ ໜ້າທີ່ ປະສານສົມທົບກັບຂະແໜງການປ້ອງກັນຄວາມສະຫງົບ ແລະ ເປັນກຳລັງສະໜັບສະໜູນໃນການຕ້ານອັກຄີໄພ ໃນກໍລະນີເກີດອັກຄີໄພຮ້າຍແຮງ.

**ມາດຕາ 74 (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຂະແໜງການໂຍທາທິການ ແລະ ຂົນສົ່ງ ມີ ສິດ ແລະ ໜ້າທີ່ ຄົ້ນຄວ້າເອົາວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ເຂົ້າໃນວຽກງານຂອງຕົນ ເປັນຕົ້ນການສຳຫຼວດອອກແບບ, ອອກອະນຸຍາດການປຸກສ້າງ, ການວາງຜັງເມືອງ ເພື່ອຮັບປະກັນຄວາມປອດໄພທາງດ້ານອັກຄີໄພ ພ້ອມກັນນັ້ນ ກໍຕ້ອງໃຫ້ການຮ່ວມມື ແລະ ປະສານສົມທົບກັບຂະແໜງການປ້ອງກັນຄວາມສະຫງົບ ໃນການຕິດຕັ້ງລະບົບທໍ່ກົກນໍ້າມອດໄຟ ແລະ ສະໜອງນໍ້າໃຫ້ພຽງພໍ, ການກວດຜ່ານ ແລະ ການຢັ້ງຢືນແຜນສະກັດກັ້ນ ແລະ ຕ້ານອັກຄີໄພ, ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມພາລະບົດບາດຂອງຕົນ.

**ມາດຕາ 75 (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງການພະລັງງານ ແລະ ບໍ່ແຮ່**

ໃນການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຂະແໜງການພະລັງງານ ແລະ ບໍ່ແຮ່ ມີ ສິດ ແລະ ໜ້າທີ່ ຊີ້ນຳ, ຄຸ້ມຄອງ ແລະ ຕິດຕາມ ກວດກາ ການຕິດຕັ້ງ, ນຳໃຊ້, ສ້ອມແປງ, ປະກອບ ອຸປະກອນໄຟຟ້າ ໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກໄຟຟ້າ, ເປັນເຈົ້າການປະສານສົມທົບກັບຂະແໜງການປ້ອງກັນຄວາມສະຫງົບ ໃນການອຳນວຍຄວາມສະດວກ ແລະ ຕັດກະແສໄຟຟ້າໃຫ້ທັນການ ໃນເວລາເກີດເຫດໄຟໄໝ້, ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມພາລະບົດບາດຂອງຕົນ.

**ມາດຕາ 76 (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ**

ໃນການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຂະແໜງການອຸດສາຫະກຳ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ຄຸ້ມຄອງ ແລະ ຕິດຕາມ ກວດກາ ການນຳເຂົ້າ-ສົ່ງອອກ ພາຫະນະ, ອຸປະກອນເຕັກນິກ

ແລະ ວັດຖຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ, ປະສານສົມທົບກັບຂະແໜງການປ້ອງກັນຄວາມສະຫງົບ ໃນການຂົນສົ່ງ, ການເຄື່ອນຍ້າຍ, ການຄຸ້ມຄອງ, ລະບົບສາງສິນຄ້າ, ເກັບຮັກສານ້ຳມັນເຊື້ອໄຟ ແລະ ວັດຖຸໄວໄຟ, ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມພາລະບົດບາດຂອງຕົນ.

**ມາດຕາ 77 (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງການກະສິກຳ ແລະ ປ່າໄມ້**

ໃນການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຂະແໜງການກະສິກຳ ແລະ ປ່າໄມ້ ມີ ສິດ ແລະ ໜ້າທີ່ ວາງແຜນສະກັດກັ້ນໄຟໄໝ້ປ່າ, ຕິດຕາມ ແລະ ເຝົ້າລະວັງ ການເກີດໄຟໄໝ້ປ່າ, ປະສານສົມທົບກັບອົງການປົກຄອງບ້ານ ເຂົ້າດັບມອດທັນທີ. ໃນກໍລະນີເກີດອັກຄີໄພຮ້າຍແຮງ ແລະ ເກີນຄວາມສາມາດທີ່ຈະແກ້ໄຂໄດ້ ຕ້ອງມີການປະສານສົມທົບກັບຂະແໜງການປ້ອງກັນຄວາມສະຫງົບ, ຂະແໜງການປ້ອງກັນປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ພ້ອມທັງລະດົມກຳລັງ, ພາຫະນະ, ອຸປະກອນເຕັກນິກ ແລະ ວັດຖຸປະກອນ ເຂົ້າໃນການຕ້ານອັກຄີໄພ ຢ່າງທັນການ, ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມພາລະບົດບາດຂອງຕົນ.

**ມາດຕາ 78 (ໃໝ່) ສິດ ແລະ ໜ້າທີ່ ຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

ໃນການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີ ສິດ ແລະ ໜ້າທີ່ ໃນການປົກປັກຮັກສາສິ່ງແວດລ້ອມ, ຕອບສະໜອງຂໍ້ມູນຄວາມສ່ຽງໃນການເກີດມີມົນລະພິດ ຈາກການເກີດອັກຄີໄພ ແລະ ໂຄສະນາ ເຜີຍແຜ່ ກົດໝາຍ ແລະ ລະບຽບການໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບຂະແໜງການປ້ອງກັນປະເທດ, ປ້ອງກັນຄວາມສະຫງົບ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ໃນການຟື້ນຟູສະພາບສິ່ງແວດລ້ອມໃນກໍລະນີເກີດອັກຄີໄພຮ້າຍແຮງ, ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມພາລະບົດບາດຂອງຕົນ.

**ມາດຕາ 79 (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ໃຫ້ການຮ່ວມມືກັບຂະແໜງການປ້ອງກັນຄວາມສະຫງົບ ໃນການສະກັດກັ້ນ ແລະ ຕ້ານອັກຄີໄພ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານ ສະກັດກັ້ນ ແລະ ຕ້ານອັກຄີໄພ

**ມາດຕາ 80 (ປັບປຸງ) ອົງການກວດກາ**

ອົງການກວດກາວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 69 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ.

**ມາດຕາ 81 (ປັບປຸງ) ເນື້ອໃນການກວດກາ**

ການກວດກາວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
2. ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ການນຳໃຊ້ມາດຕະການຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
4. ການຄຸ້ມຄອງ ແລະ ນຳໃຊ້ກອງທຶນ ສະກັດກັ້ນ ແລະ ຕ້ານອັກຄີໄພ;
5. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 82 (ປັບປຸງ) ຮູບການການກວດກາ**

ການກວດກາວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມແຜນການປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດກາ ນອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ VIII
## ເຄື່ອງແບບ, ເຄື່ອງໝາຍ ແລະ ຕາປະທັບ ຂອງກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ

**ມາດຕາ 83 (ປັບປຸງ) ເຄື່ອງແບບ ແລະ ເຄື່ອງໝາຍ**

ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ມີ ເຄື່ອງແບບ, ເຄື່ອງໝາຍສະເພາະ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ໃນເວລາປະຕິບັດໜ້າທີ່ ຝຶກແອບ, ຝຶກຊ້ອມ ແລະ ຕ້ານອັກຄີໄພ ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ມີ ເຄື່ອງນຸ່ງວິຊາສະເພາະຕ້ານອັກຄີໄພ.

**ມາດຕາ 84 ຕາປະທັບ**

ໃນການເຄື່ອນໄຫວວຽກງານຂອງຕົນ ກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ມີ ຕາປະທັບສະເພາະຂອງຕົນ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 85 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການໃຫ້ການຮ່ວມມື, ສະໜອງຂໍ້ມູນ ແລະ ປະກອບສ່ວນ ໃນການສະກັດກັ້ນ ແລະ ຕ້ານອັກຄີໄພ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 86 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

**ມາດຕາ 87 (ໃໝ່) ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝ ເນື່ອງຈາກພຶດຕິກຳ ດັ່ງນີ້:

1. ຜະລິດ, ເກັບມ້ຽນ, ຈຳໜ່າຍ, ຂົນສົ່ງ, ຄອບຄອງ ຫຼື ນຳໃຊ້ ວັດຖຸທີ່ມີຄວາມສ່ຽງ ຕໍ່ການໄໝ້ລະເບີດ ໂດຍບໍ່ຖືກຕ້ອງຕາມມາດຕະຖານເຕັກນິກ;
2. ຊື້ ຂາຍ ບັ້ງມອດໄຟ, ລະບົບທໍ່ອກນ້ຳມອດໄຟ ຫຼື ອຸປະກອນມອດໄຟ ທຸກຊະນິດ ທີ່ບໍ່ໄດ້ມາດຕະຖານເຕັກນິກ;
3. ລະເມີດມາດຕະຖານເຕັກນິກສະກັດກັ້ນ ແລະ ຕ້ານອັກຄີໄພ;
4. ກໍ່ສ້າງ ເຄຫະສະຖານ ໂດຍບໍ່ຖືກຕ້ອງຕາມມາດຕະຖານເຕັກນິກສະກັດກັ້ນ ແລະ ຕ້ານອັກຄີໄພ ແລະ ບໍ່ໄດ້ຮັບການຢັ້ງຢືນຈາກກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ;
5. ດຳເນີນກິດຈະການທີ່ມີຄວາມສ່ຽງຕໍ່ການໄໝ້ລະເບີດ ໂດຍບໍ່ໄດ້ຮັບການຢັ້ງຢືນ ຈາກກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ;
6. ດຳເນີນທຸລະກິດ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ ໂດຍບໍ່ໄດ້ຮັບອະນຸຍາດ;
7. ປ່ຽນແປງ, ເຄື່ອນຍ້າຍ ປ້າຍຊີ້ບອກທາງສຸກເສີນ, ຜັງໜີໄຟ ສະກັດກັ້ນ ແລະ ຕ້ານອັກຄີໄພ ໂດຍບໍ່ໄດ້ຮັບອະນຸຍາດ;
8. ບໍ່ມີລະບຽບການ ກ່ຽວກັບການຄຸ້ມຄອງ, ນຳໃຊ້ ແຫຼ່ງໄຟ, ແຫຼ່ງຄວາມຮ້ອນ ແລະ ທາດໄໝ້ລະເບີດ;
9. ບໍ່ມີການປະກັນໄພ ອັກຄີໄພ ຕາມລະບຽບການ.

ສຳລັບອັດຕາການປັບໃໝ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 88 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 89 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 9 ກັນຍາ 2024 ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ ສະບັບເລກທີ 09/ສພຊ, ລົງວັນທີ 24 ທັນວາ 2007.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ